# ບົດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015) ຂອງແຂວງອັດຕະປື

----------------------

**ສະເໜີ ແລະ ຮັບຮອງໃນກອງປະຊຸມໃຫຍ່ຄັ້ງທີ IX ຂອງອົງຄະນະພັກແຂວງ**

## ພາກທີ I
## ຕີລາຄາສະພາບການຈັດຕັ້ງປະຕິບັດ
## ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010)

**1. ສະພາບລວມ:**

ເຖິງວ່າສະພາບຂອງສາກົນ ແລະ ພາກພື້ນ ຍັງສືບຕໍ່ຜັນແປຢ່າງສັບສົນ ແຕ່ທ່າອ່ຽງລວມຍັງແມ່ນສັນຕິພາບ, ການຮ່ວມມື ແລະ ເຊື່ອມໂຍງເຂົ້າຫາກັນຂອງບັນດາປະຊາຊາດ. ທີ່ວປະເທດໄດ້ມີສະເຖຍລະພາບທາງ ດ້ານການເມືອງ ແລະ ຄວາມໝັ້ນຄົງຮອບດ້ານ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ GDP ບັນລຸ 7,8%, ລາຍຮັບສະເລ່ຍຕໍ່ຫົວຄົນເພີ່ມຂຶ້ນເຖິງ 986 ໂດລາ (USD).

ແຂວງອັດຕະປື; ພັກ-ລັດຖະບານໄດ້ໃຫ້ຄວາມສຳຄັນ ແລະເອົາໃຈ ໃສ່ເປັນຢ່າງສູງ, ບັນດາແຂວງອ້າຍນ້ອງຂອງ ສສ ຫວຽດນາມ, ປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ, ພາກທຸລະກິດພາຍໃນ ແລະ ຕ່າງປະເທດ ໄດ້ເພີ່ມທະວີການຮ່ວມມືຊ່ວຍເຫຼືອ ແລະ ລົງທຶນເຂົ້າໃນໂຄງການຕ່າງໆ, ບວກກັບຄະນະພັກ, ອຳນາດການປົກຄອງແຕ່ລະຂັ້ນ ແລະ ປະຊາຊົນບັນດາເຜົ່າໄດ້ສູ້ຊົນຜ່ານຜ່າ ເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນໄລຍະ 5 ປີຜ່ານມາ ມີບາດກ້າວຂະຫຍາຍຕົວໃນທ່ວງທ່າໃໝ່ຫຼາຍດ້ານ, ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ເສດຖະກິດເຕີບໂຕຢ່າງຕໍ່ເນື່ອງ, ສາມາດແກ້ໄຂສະພາບໄພພິບັດທາງທຳມະຊາດຕ່າງໆ ທີ່ເກີດຂຶ້ນດ້ວຍດີ ເປັນຕົ້ນ: ສະພາບໄພພິບັດຈາກພະຍຸເກດສະໜາໃນປີ 2009 ຜ່ານມາກໍຄືສະພາບ ໄພແຫ້ງແລ້ງໃນປີນີ້.

ການພັດທະນາແຕ່ລະຂົງເຂດວຽກງານສະແດງອອກດັ່ງນີ້:

**2. ການຈັດຕັ້ງປະຕິບັດຄາດໝາຍສູ້ຊົນ:**

**2.1. ບັນດາຄາດໝາຍດ້ານເສດຖະກິດມະຫາພາກ:**

- ລວມຍອດຜະລິດຕະພັນພາຍໃນ 5 ປີ ເພີ່ມຂຶ້ນສະເລ່ຍ 8,3% ຕໍ່ ປີ, ທຽບໃສ່ແຜນການລື່ນ 0,8% (ຄາດໝາຍວາງໄວ້ 7,5%) ໃນນີ້:

ມູນຄ່າເພີ່ມ ຂົງເຂດກະສິກຳ-ປ່າໄມ້ ເພີ່ມ 6,4%ຕໍ່ປີ ( ຄາດ ໝາຍວາງໄວ້ແມ່ນ 6,38% ).

ມູນຄ່າເພີ່ມ ຂົງເຂດອຸດສາຫະກຳ ເພີ່ມ 6%ຕໍ່ປີ (ຄາດໝາຍ ວາງໄວ້ແມ່ນ 8.46%).

ມູນຄ່າເພີ່ມ ຂົງເຂດບໍລິການເພີ່ມ 17,5%ຕໍ່ປີ (ຄາດໝາຍວາງ ໄວ້ແມ່ນ 8,9% ).

- ໃນປີ 2010 ຄາດຄະເນພົນລະເມືອງ ຈະມີປະມານ 123.816 ຄົນ ເພີ່ມຂຶ້ນສະເລ່ຍ 2,0% ຕໍ່ປີ (ຄາດໝາຍວາງໄວ້ 126.911 ຄົນ ເພີ່ມ 2,4% ຕໍ່ປີ ).

ລວມຍອດຜະລິດຕະພັນພາຍໃນປີ 2010 ເທົ່າກັບ 623 ຕື້ກີບ, ສະ ເລ່ຍ GDP ຕໍ່ຫົວຄົນໄດ້ປະມານ 5 ລ້ານກີບຕໍ່ຄົນຕໍ່ປີ ຫຼື ເທົ່າກັບ 614 ໂດ ລາຕໍ່ຄົນຕໍ່ປີ, ທຽບໃສ່ແຜນການລື່ນ 103 ໂດລາ ແລະ ໃນປີ 2005 ລາຍ ຮັບສະເລ່ຍຕໍ່ຫົວຄົນ (GDP) ມີພຽງ 3,89 ລ້ານກີບຕໍ່ຄົນຕໍ່ປີ ຫຼື ເທົ່າກັບ 371 ໂດລາຕໍ່ຄົນຕໍ່ປີ. ໂຄງປະກອບ GDP ໃນປີ 2010: ຂົງເຂດກະສິກຳ - ປ່າໄມ້ ກວມເອົາ 32,2%, ຂົງເຂດອຸດສາຫະກຳ ກວມເອົາ 39,5% ແລະ ຂົງເຂດການບໍລິການກວມເອົາ 30,2%.

- ໃນ 2010 ລາຍຮັບງົບປະມານທ້ອງຖິ່ນບັນລຸໄດ້ 71,8 ຕື້ກີບ ທຽບໃສ່ປີ 2005 ເພີ່ມຂຶ້ນ 2,8 ເທົ່າຕົວ, ທຽບໃສ່ແຜນລາຍຮັບໃນແຕ່ລະປີ ລື່ນປະມານ 9,7%. ດ້ານລາຍຈ່າຍ 121,8 ຕື້ກີບ ທຽບໃສ່ປີ 2005 ເພີ່ມ ຂຶ້ນ 80%.

- ດ້ານການຄ້າກັບຕ່າງປະເທດໃນ 5 ປີ ສົ່ງອອກສິນຄ້າທັງໝົດ ບັນລຸໄດ້ 25,58 ລ້ານໂດລາ (ສາຫະລັດ), ນຳເຂົ້າ 32,44 ລ້ານໂດລາ ແລະ ຂາດດຸ່ນທັງໝົດ 6,86 ລ້ານໂດລາ. ການນຳເຂົ້າສ່ວນໃຫຍ່ແມ່ນ ເພື່ອການລົງທຶນກໍ່ສ້າງພື້ນຖານໂຄງລ່າງ.

**2.2 ການຈັດຕັ້ງປະຕິບັດບາງຄາດໝາຍສະຫັດສະວັດດ້ານການພັດ ທະນາ (MDGs):**

- ການແກ້ໄຂຄວາມທຸກຍາກ: ໃນປີ 2005 ທົ່ວແຂວງຍັງມີຄົວ ເຮືອນທຸກຍາກ 5.352 ຄົວເຮືອນ ກວມ 27,2% ຂອງພົນລະເມືອງ, ມາ ຮອດປະຈຸບັນ ຍັງເຫຼືອປະມານ 3.910 ຄົວເຮືອນ ຫຼື ເທົ່າກັບ 18% ຂອງ ຈຳນວນຄົວເຮືອນທົ່ວແຂວງ.

- ອັດຕາການເຂົ້າຮຽນສຸດທິຂອງເດັກໃນເກນອາຍຸຊັ້ນປະຖົມບັນລຸ 87,3% ຫຼຸດຄາດໝາຍ 4,7% (ຄາດໝາຍວາງໄວ້ 92% ) ທຽບໃສ່ 5 ປີ ກ່ອນ ເພີ່ມຂຶ້ນ 17,7%.

- ຫຼຸດຜ່ອນອັດຕາການຕາຍຂອງແມ່ ຈາກ 405 ຄົນຕໍ່100.000 ຄົນ ມາເປັນ 300 ຄົນ, ຫຼຸດຜ່ອນອັດຕາການຕາຍຂອງເດັກລຸ່ມ 1 ປີ ຈາກ 70 ຄົນຕໍ່1.000 ຄົນໃນປີ 2006 ມາເປັນ 55 ຄົນໃນປີ 2010 ແລະ ໃນໄລ ຍະດຽວກັນຫຼຸດຜ່ອນອັດຕາການຕາຍຂອງເດັກລຸ່ມ 5 ປີ ຈາກ 98 ຕໍ່1.000 ມາເປັນ 75 ຕໍ່ 1.000 ຄົນ .

- ອັດຕາການຊົມໃຊ້ນ້ຳສະອາດຂອງຄົວເຮືອນ ບັນລຸໄດ້ 66,4% (ລື່ນແຜນ 24%) ແລະ ການຊົມໃຊ້ວິດຖ່າຍມາຮອດປະຈຸບັນມີພຽງ 35,6%.

**3. ສະພາບການລົງທຶນ:**

ການລົງທຶນຂອງລັດ: ໃນ 5 ປີ ຜ່ານມາ ສະພາແຫ່ງຊາດອະນຸມັດໃຫ້ 259 ໂຄງການ ມູນຄ່າ 599,48 ຕື້ກີບ. ໄດ້ຈັດຕັ້ງປະຕິບັດແລ້ວ ມູນຄ່າ 207,17 ຕື້ກີບ; ໃນນັ້ນ ທຶນພາຍໃນ 64,88 ຕື້ກີບ ເພີ່ມຂຶ້ນ 28,61%/ປີ ແລະ ທຶນຕ່າງປະເທດ 142,29 ຕື້ກີບ. ການລົງທຶນສຸມໃສ່ຂົງເຂດເສດຖະ ກິດ 129.27 ຕື້ກີບ ກວມເອົາ 62,4%, ຂົງເຂດວັດທະນະທຳ-ສັງຄົມ 31,06 ຕື້ກີບ ກວມເອົາ 14,99% ແລະ ຂົງເຂດບໍລິຫານອື່ນໆ 46,84 ຕື້ ກີບ ກວມເອົາ 22,61%.

ການລົງທຶນໄດ້ສຸມໃສ່ໂຄງການຂະໜາດໃຫຍ່ຄື: ໂຄງການກໍ່ສ້າງ ຊົນລະປະທານເຊປຽນ, ເສັ້ນທາງຍຸດ ທະສາດຊາຍແດນ 2 ເສັ້ນ, ໂຄງການພັດທະນາຊາຍແດນລາວ-ຫວຽດນາມ (ເຂດວົງຕົດ), ບູລະນະຮັກສາທາງ ຫຼວງແຫ່ງຊາດ, ກໍ່ສ້າງທາງຊົນນະບົດໄຊເສດຖາ-ຊານໄຊ (ADB10) ແລະ ທຶນແກ້ໄຂໄພພິບັດພະຍຸເກດສະໜາ ແລະ ອື່ນໆ.

- ທຶນຊ່ວຍເຫຼືອ ແລະກູ້ຢືມ (ODA) ຈາກປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນທັງໝົດ 28,7 ລ້ານໂດລາ ຫຼື ປະມານ 235,34 ຕື້ ກີບ; ໄດ້ສຸມໃສ່ການກໍ່ສ້າງໂຄງລ່າງພື້ນຖານ, ການພັດທະນາຊົນນະບົດ, ການສຶກສາ, ສາທາລະນະສຸກເປັນຕົ້ນ.

- ການລົງທຶນພາກເອກະຊົນພາຍໃນ ແລະ ຕ່າງປະເທດ; ສາມາດ ດຶງດູດການລົງທຶນໄດ້ 81 ໂຄງການມູນ ຄ່າ 928,4 ລ້ານໂດລາ, ໃນນີ້: ຂະ ແໜງພະລັງງານໄຟຟ້າ 69%, ຂະແໜງບໍ່ແຮ່ 15%, ຂະແໜງປູກໄມ້ອຸດສາ ຫະກຳ 11%, ຂະແໜງອຸດສາຫະກຳປຸງແຕ່ງໄມ້ 3%; ສ່ວນຂະແໜງ ການຄ້າ-ການບໍລິການ, ຂະແໜງ ປູກຝັງ, ລ້ຽງສັດກວມເອົາຂະແໜງລະ 1%.

ຄຽງຄູ່ກັນນີ້ ສາຂາທະນາຄານທຸລະກິດຂອງລັດ ເພີ່ມຂຶ້ນ 1 ສາ ຂາ ແລະ 2 ໜ່ວຍບໍລິການ ຂອງທະນາຄານນະໂຍບາຍ; ປ່ອຍສິນເຊື່ອ ໄດ້ 246,57 ຕື້ກີບ, ໃນນີ້: ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ 18,2 ຕື້ກີບ. ນອກຈາກນີ້ ຍັງມີການລົງທຶນເອງຂອງປະຊາຊົນເປັນຕົ້ນ: ການຂະຫຍາຍເນື້ອທີ່ການຜະລິດ, ການປຸກສ້າງທີ່ຢູ່ອາໄສ, ການຊື້ພາຫານະອຸປະກອນການຜະລິດ ແລະ ບັນດາທຸລະກິດບໍລິການຕ່າງໆ.

**4. ການຈັດຕັ້ງປະຕິບັດແຜນພັດທະນາຂອງຂະແໜງການຕ່າງໆ**

**4.1 ວຽກງານກະສິກຳ-ປ່າໄມ້:** ບູລິມະສິດຕົ້ນຕໍຍັງແມ່ນສຸມໃສ່ແຜນງານຜະລິດສະບຽງອາຫານໃນນັ້ນ: ຂະຫຍາຍເນື້ອທີ່ນາ, ກໍ່ສ້າງລະບົບຊົນປະທານ, ຂະຫຍາຍສູນບໍລິການເຕັກນິກ, ການສ້າງສິນ ເຊື່ອຈຸລະພາກຊົນນະ ບົດຕິດພັນກັບກຸ່ມຜະລິດກະສິກຳ ແລະ ອື່ນໆ. ໃນນີ້ ໄດ້ຂະຫຍາຍເນື້ອ ທີ່ນາໃໝ່ໄດ້ 3.210 ຮຕ ເພີ່ມຂຶ້ນເປັນ 21.460 ຮຕ; ກໍ່ສ້າງຊົນລະປະທານ ໃໝ່ໄດ້ 4 ແຫ່ງ, ປະຈຸບັນສາມາດຫົດໄດ້ເຖິງ 1.100 ຮຕ, ສືບຕໍ່ກໍ່ສ້າງຊົນ ລະປະທານເຊປຽນ 1.500 ຮຕ ສຳເລັດຫົວງານ ແລະຄອງສົ່ງນ້ຳ 70%. ນາແຊງເພີ່ມຂຶ້ນຈາກ 375 ຮຕ ເປັນ 1.012 ຮຕ; ມີສູນບໍລິການເຕັກນິກ 5 ແຫ່ງ ສ້າງໃໝ່ 4 ແຫ່ງ: ໄຊເສດຖາ, ຊານໄຊ, ສະໜາມໄຊ ແລະ ພູວົງ, ເນື້ອທີ່ໄຮ່ໝູນວຽນ ແລະ ໄຮ່ຄົງທີ່ ຫຼຸດລົງຈາກ 1.500 ຮຕ ເປັນ 1.287 ຮຕ; ສ່ວນເນື້ອທີ່ໄຮ່ເລື່ອນລອຍຫຼຸດລົງ ຈາກ 415 ຍັງເຫຼືອປະມານ158 ຮຕ.

ການຜະລິດເຂົ້າຮອດປະຈຸບັນ ສາມາດສະໜອງເຂົ້າກິນພາຍໃນ ແຂວງໄດ້ຢ່າງພຽງພໍ, ມີສ່ວນແຮໄວ້ ແລະ ສາມາດຂາຍເປັນສິນຄ້າຈຳນວນໜຶ່ງ. ໃນປີ 2005 ຜະລິດເຂົ້າໄດ້ 45.000 ໂຕນ ແລະ ໃນປີ 2008 ຜະລິດໄດ້ 53.000 ໂຕນ (ສະເລ່ຍເຂົ້າກິນໄດ້ 400-460 ກິໂລຕໍ່ຄົນຕໍ່ປີ); ຍົກ ເວັ້ນປີ 2009 ທີ່ຖືກພະຍຸເກດສະໜາທຳລາຍ ເຮັດໃຫ້ຜົນລະລິດເຂົ້າບັນລຸໄດ້ພຽງແຕ່ 29.000 ໂຕນ, ສ່ວນປີ 2010 ນີ້ຊ້ຳພັດປະສົບກັບໄພ ແຫ້ງແລ້ງ ເຮັດໃຫ້ ຜົນຜະລິດບັນລຸໄດ້ 55-60%.

ມາຮອດປະຈຸບັນໄດ້ສົ່ງເສີມການປູກພືດ-ຜັກຕ່າງໆໄດ້1.300 ຮຕ ,ທຽບໃສ່ປີ 2005 ເພີ່ມ 75,3%. ຄຽງຄູ່ກັນນັ້ນໄດ້ສົ່ງເສີມການປູກພືດ ເປັນສິນຄ້າ ແລະ ເຫັນວ່າສາມາດເປັນໜໍ່ແໜງໃນອານາຄົດ ເຊັ່ນ: ສາລີ, ມັນຕົ້ນ, ກາເຟ, ອ້ອຍ ແລະ ອື່ນໆ.

**+ ການລ້ຽງສັດ ແລະ ການປະມົງ:** ແຂວງພວກເຮົາມີມູນເຊື້ອໃນ ການລ້ຽງສັດໃຫຍ່ ເປັນຕົ້ນ: ຄວາຍ, ໃນໄລຍະ 5 ປີຜ່ານມາໄດ້ສົ່ງເສີມການລ້ຽງສັດປະເພດຕ່າງໆ ດ້ວຍການສະໜອງສິນເຊື່ອຊື້ສັດໃຫ້ກຸ່ມຜະລິດ ຂະຫຍາຍຕະໜ່າງສັດຕະວະແພດ , ຊຸກຍູ້ການລ້ຽງແບບຄອບຄົວ ແລະ ການລ້ຽງເປັນຟາມ; ເຮັດໃຫ້ຝູງຄວາຍ ເພີ່ມຂຶ້ນສະເລັ່ຍ 3%ຕໍ່ປີ, ງົວ 8%ຕໍ່ປີ, ໝູ-ແບ້ 12%ຕໍ່ປີ, ສັດປີກ 14%ຕໍ່ປີ. ອັນພົ້ນເດັ່ນໃນໄລຍະ 2-3 ປີ ຜ່ານມານີ້ ແມ່ນການສົ່ງເສີມລ້ຽງປາໃນໜອງຢາເຂດນ້ຳປາເມືອງຊານໄຊ, ປາກະຊັງຕາມລຳນ້ຳເຊກອງບ້ານສາຍ ສຳພັນ, ການສ້າງວັງສະຫງວນຢູ່ 27 ບ້ານ. ການຜະລິດດັ່ງກ່າວສາມາດສະໜອງ ສັງຄົມສະເລ່ຍປະມານ 28-32 ກິໂລຕໍ່ຄົນຕໍ່ປີ, ສາມາດຂາຍຄວາຍ-ງົວ ອອກໄປຕ່າງແຂວງຈຳນວນໜຶ່ງ.

**+ ການຄຸ້ມຄອງປ່າໄມ້ ແລະ ສົ່ງເສີມການປູກໄມ້ອຸດສາຫະກຳ:** ໃນ 5 ປີຜ່ານມາໄດ້ຮັບອະນຸມັດຂຸດຄົ້ນໄມ້ ຈາກລັດຖະບານສຸມໃສ່ການປຸງແຕ່ງ ແລະ ສົ່ງອອກຕາມລະບຽບຫຼັກການ ແລະເຮັດການຂຸດຄົ້ນຕາມເຂດຈັດສັນປ່າຜະລິດ. ຄຽງຄູ່ກັນນັ້ນໄດ້ເອົາໃຈໃສ່ຄຸ້ມຄອງ ແລະ ຈັດສັນ 3 ປະເພດປ່າ, ດິນບໍລິເວນນ້ຳ ແລະ ເຂດເຊື່ອມ ຕໍ່ປ່າສະຫງວນ ເຊິ່ງສາມາດຫັນເປັນທຶນໃນອານາຄົດ ໂດຍຮ່ວມມືກັບບັນດາໂຄງການຕ່າງໆ. ສົ່ງເສີມການລົງທຶນເຂົ້າໃສ່ການປູກໄມ້ອຸດສະຫາກຳ ຮ່ວມກັບບັນດາບໍລິສັດຂອງບັນດາແຂວງ ປະເທດເພື່ອນມິດຕາມທິດ ທີ່ໄດ້ກຳນົດໄວ້ໄດ້ເປັນຮູບປະທຳ ໃນນັ້ນ: ການປູກຢາງກາວຊູໄດ້ 12.500ຮຕ, ໄມ້ອື່ກ 600 ຮຕ, ການປູກ ໄມ້ພັນພື້ນ ເມືອງຂອງປະຊາຊົນ ເຊັ່ນ: ໄມ້ດູ່,ໄມ້ແດງ, ໄມ້ສັກ ແລະ ປູກທົດລອງ ໄມ້ໃຫ້ນ້ຳມັນ (ໝາກເຍົາ, ຕົ້ນປາມ). ໄດ້ສຳເລັດການກຳນົດເນື້ອທີ່ດິນ ເພື່ອສົ່ງເສີມການປູກໄມ້ອຸດສະຫະກຳ ປະມານ 30.000 ຮຕ ໃນ 5 ຕົວເມືອງ.

**4.2. ວຽກພະລັງງານ-ບໍ່ແຮ່:**

- ພວກເຮົາໄດ້ສຳເລັດການຂະຫຍາຍຕາຂ່າຍໄຟຟ້າລົງເຖິງໃຈກາງ ຂອງ 5 ຕົວເມືອງ, ກວມເອົາ 48% ຂອງບ້ານ (52 ບ້ານ) ແລະ 42% ຂອງ ຄົວເຮືອນຊົມໃຊ້, ນອກນັ້ນຍັງມີ 8 ບ້ານໄດ້ຊົມໃຊ້ໄຟຟ້າແສງຕາເວັນ, ຈຸດ ສຸມກຸ່ມບ້ານ ແລະ ດ່ານສາກົນພູເກືອກໍ່ມີໄຟຟ້າເຂົ້າເຖິງ ໄດ້ຕິດຕັ້ງໄຟຟ້າ ເບື້ອງທາງຢູ່ ເທດສະບານແຂວງ ແລະ ເມືອງ, ປະຊາຊົນ 6 ບ້ານໃຫຍ່ ໄດ້ ປະກອບສ່ວນທຶນຮອນຂະຫຍາຍໄຟຟ້າເຂົ້າບ້ານ. ໄດ້ມີກຳລັງໄຟຟ້າຈາກ ສາຍສົ່ງ 115 ກິໂລວັດ ສະໜອງຢ່າງພຽງພໍໃຫ້ແກ່ກອຸດສາຫະກຳ, ກະສິກຳ ແລະ ອື່ນໆ. ໄດ້ສຳເລັດການວາງ ແຜນຍຸດທະສາດຂະຫຍາຍໄຟຟ້າ ທົ່ວແຂວງ. ປະຈຸບັນໄດ້ມີ 4 ບໍລິສັດກໍ່ສ້າງ ແລະ ຕິດຕັ້ງໄຟຟ້າທີ່ສາມາດຕິດ ຕັ້ງລະບົບສາຍສົ່ງໄຟຟ້າ ແລະ ບໍລິການຕິດຕັ້ງໄຟຟ້າໃນອາຄານ.
- ໄດ້ເລີ່ມກໍ່ສ້າງເຂື່ອນເຊກະໝານ 1 ໂດຍເຮັດບາງວຽກຄື: ເສັ້ນທາງ, ກະກຽມອ່ວຍແລວນ້ຳ, ກໍ່ສ້າງຕິດຕັ້ງສາຍສົ່ງໄຟຟ້າ, ສະຖານທີ່ເຮັດວຽກ-ພັກເຊົາ ແລະ ອື່ນໆ, ປະຈຸບັນກະກຽມເຊັນສັນຍາສຳປະທານ. ດຳເນີນການສຳຫຼວດເຂື່ອນນ້ຳກົງ 0,1,2,3, ເຂື່ອນເຊປຽນ-ເຊນ້ຳນ້ອຍ ເຂື່ອນເຊປຽນ-ຫ້ວຍຊອຍ, ເຂື່ອນເຊປຽນ 2,3,4,5, ເຂື່ອນຫ້ວຍຊອຍ, ເຂື່ອນເຊກອງຕອນລຸ່ມ, ສຳຫຼວດການກໍ່ສ້າງສາຍສົ່ງຂະໜາດໃຫຍ່ 500 ກິໂລວັດ ຜ່ານແຂວງອັດຕະປື ໄປ ສສ ຫວຽດນາມ.

**- ສຳລັບວຽກບໍ່ແຮ່:** ສ່ວນໃຫຍ່ຍັງສຸມໃສ່ວຽກຊອກຄົ້ນ-ສຳຫຼວດ ແລະ ກະກຽມການພັດທະນາແຮ່ຄຳຢູ່ ເຂດວັງຕັດ, ບໍ່ບົກຊິດຢູ່ເມືອງຊານໄຊ ບໍ່ທອງແດງຢູ່ເມືອງພູວົງ ແລະ ເມືອງໄຊເສດຖາ. ອະນຸມັດເນື້ອທີ່ເພື່ອກໍ່ສ້າງ ໂຮງງານຜະລິດອະລູມິນຽມຢູ່ເມືອງສະໜາມໄຊ, ປັດຈຸບັນມີ 8 ບໍລິສັດທີ່ ໄດ້ຮັບອະນຸຍາດໃນການຊອກຄົ້ນ-ສຳຫຼວດແຮ່ທາດຕ່າງໆ ຢູ່ແຂວງຂອງພວກເຮົາ.

**4.3. ດ້ານອຸດສະຫະກຳ - ການຄ້າ:**

**- ວຽກອຸດສາຫະກຳ** ໄດ້ສຸມໃສ່ສົ່ງເສີມອຸດສາຫະກຳປຸງແຕ່ງໄມ້ ແລະ ເຟີນີເຈີ 24 ແຫ່ງ ທຽບໃສ່ປີ 2006 ເພີ່ມຂຶ້ນ 13 ແຫ່ງ ເຊິ່ງຕັ້ງຢູ່ທຸກໆ ເມືອງ, ໂຮງງານອຸດສະຫະກຳປຸງແຕ່ງຂະໜາດນ້ອຍ ແລະ ຫັດຖະກຳມີ 449 ຫົວໜ່ວຍ. ມີຜະລິດຕະພັນ

ຈາກເຟີນີເຈີໄມ້, ຫວາຍ, ໄມ້ປ່ອງ, ຜ້າ ແພ, ເຄື່ອງປັ້ນດິນເຜົາ, ເຫຼົ້າ, ອາຫານ ທີ່ເປັນ ເຄື່ອງໃຊ້, ເປັນເຄື່ອງບໍລິໂພກ ແລະ ທີ່ລະລຶກສະໜອງໃຫ້ແກ່ສັງຄົມ.

- ໄດ້ສ້າງ ແລະ ປັບປຸງຕະຫຼາດຢູ່ເທດສະບານແຂວງ ແລະເມືອງ, ເກີດມີຕະຫຼາດນ້ອຍຢູ່ຈຸດສຸມກຸ່ມບ້ານ ຈຳນວນໜຶ່ງ ແລະ ມີສິນຄ້າບໍລິໂພກ, ສິນຄ້າພື້ນເມືອງຂອງທ້ອງຖິ່ນເຂົ້າມາຈຳໜ່າຍຫຼາຍຂຶ້ນ.

- ສິນຄ້າສົ່ງອອກຕົ້ນຕໍປະກອບດ້ວຍໄມ້-ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນກະສິກຳ ແລະ ສັດລ້ຽງ ເຫັນວ່າມີການເພີ່ມຂຶ້ນ. ສ່ວນການນຳເຂົ້າຕົ້ນຕໍປະກອບມີອຸປະກອນການກໍ່ສ້າງ, ເຄື່ອງໃຊ້ສອຍຄົວເຮືອນ, ພາຫານະການຜະລິດ ແລະ ອຸປະກອນຮັບໃຊ້ບັນດາໂຄງການລົງທຶນຕ່າງໆ. ພ້ອມກັນນັ້ນກໍໄດ້ມີການເຄື່ອນໄຫວວາງສະແດງສິນຄ້າທັງພາຍໃນ ແລະ ຕ່າງປະເທດ. ໄດ້ເອົາໃຈໃສ່ຄຸ້ມຄອງສິນຄ້າ, ລາຄາ ແລະ ການດັດສົມຕະຫຼາດ; ຄຸ້ມຄອງ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຜະລິດທຸລະກິດ, ການຈໍລະຈອນສິນຄ້າພາຍໃນແຂວງ ແລະ ຕ່າງແຂວງ.

**4.4 . ວຽກງານໂຍທາທິການ-ຂົນສົ່ງ, ໄປສະນີ-ໂທລະຄົມມະນາຄົມ.**

**- ວຽກງານຂົວ-ທາງ:** ແມ່ນວຽກຈຸດສຸມອັນດັບ 1 ຂອງແຂວງ ເຊິ່ງ ກວມເອົາຫຼາຍກວ່າ 50% ຂອງການລົງ ທຶນຂອງລັດ. ໄດ້ກໍ່ສ້າງເສັ້ນທາງຍຸດທະສາດເຊັ່ນ: ເສັ້ນທາງສູ່ຊາຍແດນຫວຽດນາມ ແລະ ກຳປູເຈຍ, ເສັ້ນທາງຊົນນະບົດ, ເສັ້ນທາງຕາມຕົວເມືອງ ເຊິ່ງສາມາດເຊື່ອມຕໍ່ລະຫວ່າງແຂວງ- ເມືອງ-ທຸກກຸ່ມບ້ານ ໃນນີ້ ມີເມືອງໃຈກາງຂອງແຂວງ ແລະ 2 ເມືອງ ມີເສັ້ນທາງປູຢາງ. ທັງໝົດນັ້ນໄດ້ເຮັດໃຫ້ການຂົນສົ່ງມີການຂະຫຍາຍຕົວເພີ່ມຂຶ້ນ ໄວ ຄື: ບໍລິມາດການຂົນສົ່ງສິນຄ້າ ບັນລຸໄດ້ທັງໝົດ 658.399 ໂຕນ, ບໍລິມາດຂົນສົ່ງໂດຍສານ 335.845 ພັນຄົນ ສະເລ່ຍເພີ່ມຂຶ້ນ 59% ຕໍ່ປີ; ສາມາດບໍລິການການຂົນສົ່ງຜ່ານແດນ ລະຫວ່າງບັນດາແຂວງພາກໃຕ້ຂອງ ສປປ ລາວ ກັບ ສສ ຫວຽດນາມ ຂະຫຍາຍຕົວເພີ່ມຂຶ້ນ.

ສຳເລັດການສຳຫຼວດ-ອອກແບບຕົວເມືອງໃຈກາງຂອງແຂວງແລະໃຈກາງຂອງ 4 ເມືອງ ພ້ອມທັງລົງ ມືພັດທະນາເປັນແຕ່ລະບາດກ້າວ, ອອກແບບຜັງເຂດດ່ານສາກົນພູເກືອ, ເຂດຈຸດສຸມພັດທະນາກຸ່ມບ້ານຈຳນວນໜຶ່ງ ເຊັ່ນ: ເຂດພະເມືອງ, ບ້ານ ຣົມ, ນ້ຳງອນ ແລະ ບ່ອນອື່ນໆ.

**- ການບໍລິການໄປສະນີ ແລະໂທລະຄົມມະນາຄົມ:** ຕາໜ່າງການບໍລິການກວມເອົາທຸກພື້ນທີ່ຂອງແຂວງ ມີການບໍລິການຫຼາຍຮູບແບບ, ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການຕິດຕໍ່ສື່ສານຢູ່ພາຍໃນແຂວງ, ຕ່າງແຂວງ ແລະ ຕ່າງປະເທດ, ການບໍລິການດ້ານອິນເຕີແນັດມີທ່າອ່ຽງເພີ່ມຂຶ້ນ.

**4.5. ດ້ານການເງິນ-ທະນາຄານ:** ສຳເລັດການປັບປຸງການຄຸ້ມຄອງຕາມສາຍຕັ້ງຂອງຂະແໜງການເງິນຂັ້ນແຂວງ, ທົດລອງການໂຮມຫ້ອງການການເງິນ ແລະ ແຜນການເມືອງເຂົ້າກັນ, ແບ່ງຄວາມຮັບຜິດຊອບໃນການເກັບພາສີທີ່ດິນລະຫວ່າງຂະແໜງການເງິນກັບອົງການຄຸ້ມຄອງທີ່ດິນ, ຄຸ້ມຄອງລາຍຮັບ-ລາຍຈ່າຍໃຫ້ຮັດກຸມ, ປະຕິບັດວິໄນການເງິນຢ່າງເຂັ້ມງວດກວ່າເກົ່າ. ຈາກນັ້ນ, ຈຶ່ງເຮັດໃຫ້ການເກັບລາຍຮັບເພີ່ມຂຶ້ນໃນແຕ່ລະປີ ໂດຍສະເພາະແມ່ນລາຍຮັບຈາກອາກອນ ແລະ ຊັບສິນ. ຄຸ້ມຄອງລາຍຈ່າຍຢ່າງເປັນລະບົບພໍສົມຄວນສາມາດຮັບປະກັນການເບີກຈ່າຍເງິນເດືອນ-ເງິນອຸດໜູນ ແລະ ເງິນບໍລິຫານປົກກະຕິດີພໍສົມຄວນ, ຊ່ວຍສູນກາງໃນການຄຸ້ມຄອງ ແລະ ເກັບລາຍຮັບບ້ວງຂອງສູນກາງ ເປັນຕົ້ນ: ເງິນຂາຍໄມ້ ແລະ ລາຍຮັບພາສີດີກວ່າເກົ່າ.

+ ໄດ້ຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວ ຂອງສາຂາທະນາຄານທຸລະກິດໃຫ້ມີການເຕີບໂຕຢ່າງຕໍ່ເນື່ອງ, ສ້າງເງື່ອນໄຂໃຫ້ປະຊາຊົນສາມາດເຂົ້າເຖິງແຫຼ່ງທຶນຂອງທະນາຄານ ໃນນີ້, ສະເພາະສິນເຊື່ອຂອງທະນາຄານນະໂຍບາຍ ໄດ້ສ້າງຕັ້ງກົນໄກປະສານງານໜຶ່ງຂຶ້ນ ລະຫວ່າງອົງການປົກຄອງທ້ອງຖິ່ນຂັ້ນ ແຂວງ-ຂັ້ນເມືອງ ກັບທະນາຄານ ແລະ ປະຊາຊົນ, ປະສານສົມທົບກ່ຽວກັບການຄຸ້ມຄອງການນຳເຂົ້າທຶນຂອງນັກລົງທຶນຕ່າງປະເທດ ລະຫວ່າງທະນາຄານກັບພາກສ່ວນສົ່ງເສີມການລົງທຶນດີຂຶ້ນກວ່າເກົ່າ. ໃນ 5 ປີຜ່ານມາສາມາດລະດົມທຶນໄດ້ທັງໝົດ 270 ຕື້ກີບ ແລະ ປ່ອຍສິນເຊື່ອໄດ້ 246 ຕື້ກີບ.

**4.6. ດ້ານທ່ອງທ່ຽວ:** ພື້ນຖານໂຄງລ່າງດ້ານການທ່ອງທ່ຽວໄດ້ຮັບ ການປັບປຸງດີຂຶ້ນເທື່ອລະກ້າວ, ປັດຈຸບັນ ມີໂຮງແຮມ 5 ແຫ່ງ, ເຮືອນພັກ 15 ແຫ່ງ ແລະ ຮ້ານອາຫານ 40 ແຫ່ງ; ມີແຫຼ່ງທ່ອງທ່ຽວ 56 ແຫ່ງ ແລະ ໄດ້ຮັບການພັດທະນາແລ້ວປະມານ 22 ແຫ່ງ. ຄາດຄະເນນັກທ່ອງທ່ຽວປີ 2010 ເຂົ້າມາປະມານ 37.625 ຄົນ ທຽບໃສ່ປີ 2006 ເພີ່ມຂຶ້ນ 1,5 ເທົ່າ, ສະເລ່ຍເພີ່ມຂຶ້ນປະມານ 28% ຕໍ່ປີ.

**4.7. ວຽກງານຄຸ້ມຄອງທີ່ດິນ:** ຕົ້ນຕໍແມ່ນສຳເລັດການລົງສຳຫຼວດວັດແທກ, ແຕ້ມແຜນທີ່ຕາດິນຕາມແຜນ ຜັງເມືອງ, ແຜນພັດທະນາຕົວເມືອງ ແລະ ສ້າງນິຕິກຳຕ່າງໆກ່ຽວກັບທີ່ດິນສຳເລັດຕາມຄາດໝາຍທີ່ວາງໄວ້, ສາມາດອອກແຜນທີ່ທີ່ດິນສະ

ໜອງໃຫ້ແກ່ການອອກໃບຕາດິນທັງໝົດໄດ້ 6.515 ຕອນ ເທົ່າກັບ 391 ຮຕ, ກຳນົດເນື້ອທີ່ການປູກໄມ້ອຸດສາຫະກຳໄດ້ 29.649 ຮຕ. ສຳເລັດການສຳຫຼວດ ແລະ ວາງແຜນພັດທະນາທີ່ດິນຈຸລະພາກຢູ່ເມືອງພູວົງ, ກຳນົດແບ່ງເຂດ 8 ປະເພດທີ່ດິນມະຫາພາກ ຂັ້ນແຂວງ ເພື່ອສະເໜີໃຫ້ສະພາແຫ່ງຊາດຮັບຮອງ; ສາມາດຄຸ້ມຄອງ ແລະ ເກັບລາຍຮັບຈາກທີ່ດິນເພີ່ມຂຶ້ນຫຼາຍກວ່າ 3 ເທົ່າຕົວຈາກປີ 2005 ເຊິ່ງຈະກາຍເປັນ ແຫຼ່ງລາຍຮັບທີ່ໝັ້ນຄົງຖາວອນໃນອານາຄົດ.

**5. ດ້ານວັດທະນະທຳ - ສັງຄົມ ແລະ ລຶບລ້າງຄວາມທຸກຍາກ:**

**- ດ້ານການສຶກສາ:** ໃນ 5 ປີ ຜ່ານມາໄດ້ສຸມໃສ່ຂະຫຍາຍໂຮງຮຽນ ສາມັນທຸກລະດັບ ທົ່ວແຂວງມີໂຮງ ຮຽນທັງໝົດ 261 ແຫ່ງ ເພີ່ມຂຶ້ນ 21,1 ເປີເຊັນ; ໃນນີ້ທຸກໆບ້ານມີໂຮງຮຽນປະຖົມ. ຄຸນນະພາບການຮຽນ-ການສອນໄດ້ຮັບການປັບປຸງດີຂຶ້ນ ເຮັດໃຫ້ອັດຕາເຂົ້າຮຽນລວມໃນຊັ້ນອະນຸບານ ບັນລຸໄດ້ 15,1%, ອັດຕາເຂົ້າຮຽນສຸດ ທີຊັ້ນປະຖົມ 87,3% ທຽບໃສ່ 5 ປີຜ່ານມາ ເພີ່ມຂຶ້ນ 17,7%, ຊັ້ນມັດທະຍົມຕອນຕົ້ນ ບັນລຸ 44,6% ເພີ່ມຂຶ້ນ 2,5% ແລະ ຊັ້ນມັດທະຍົມຕອນປາຍ 24%, ອັດຕາການຮູ້ໜັງສື ໃນເກນອາຍຸ 15-40 ປີ ກວມເອົາ 86,8%. ດ້ານອາຊີວະສຶກສາມີໂຮງຮຽນເຕັກນິກ 2 ແຫ່ງ ໃນນັ້ນ ຂອງລັດ 1 ແຫ່ງ; ສະເພາະໂຮງຮຽນອາຊີວະສຶກສາມີ 6 ສາ ຂາວິຊາຮຽນໃນລະດັບຊັ້ນກາງ, ມີນັກສຶກສາຈົບແລ້ວ 898 ຄົນ ແລະ ຄາດຄະເນປີ 2010 ຈະມີນັກສຶກສາເສັງຈົບ 242 ຄົນ; ສ່ວນໂຮງຮຽນ ເອກະຊົນ (ວິທະຍາໄລຄອມບິສ) ມີນັກສຶກສາຮຽນຈົບໃນລະດັບຊັ້ນສູງແລ້ວ 356 ຄົນ ແລະ ຄາດຄະເນປີ 2010 ຈະມີນັກສຶກສາເສັງຈົບ 248 ຄົນ. ປະຈຸບັນ ສາ ມາດເປີດຮຽນໃນລະດັບປະລິນຍາຕີສາ ຂາບໍລິຫານທຸລະກິດ. ນອກຈາກນີ້ ໃນ 5 ປີ ຜ່ານມາ ຍັງໄດ້ສົ່ງນັກຮຽນໄປຮຽນຕໍ່ ທັງພາຍໃນ ແລະ ຕ່າງປະ ເທດ 1.727 ຄົນ ໃນນີ້: ສົ່ງໄປຮຽນຕ່າງປະເທດລະດັບຊັ້ນສູງ ແລະ ປະລິນ ຍາຕີ 213 ຄົນ.

**- ຂະແໜງສາທາລະນະສຸກ:** ໄດ້ສຸມໃສ່ປັບປຸງ ແລະ ຂະຫຍາຍຕາ ໜ່າງສາທາລະນະສຸກສາມາດບໍລິການ ໄປເຖິງເຂດຫ່າງໄກສອກຫຼີກໃນທົ່ວແຂວງ, ພື້ນຖານໂຄງລ່າງຈຳນວນໜຶ່ງໄດ້ຮັບການປັບປຸງ ແລະກໍ່ສ້າງ ເປັນຕົ້ນ: ກໍ່ສ້າງໂຮງໝໍຫຼັງໃໝ່ຂະໜາດ 200 ຕຽງ, ກໍ່ສ້າງສຸກສາລາ 7 ແຫ່ງ, ເຮືອນລໍຖ້າເກີດລູກ 5 ແຫ່ງ ແລະ ຫ້ອງກວດ ພະຍາດເອກະຊົນເພີ່ມຂຶ້ນຈາກ 2 ແຫ່ງມາເປັນ 5 ແຫ່ງ, ຕູ້ຢາປະຈຳບ້ານ ເພີ່ມຂຶ້ນຈາກ 29 ຕູ້ ເປັນ 147 ຕູ້. ວຽກງານສຸຂະສຶກສາ ແລະ ສົ່ງເສີມການຮັກສາສຸຂະພາບໄດ້ຮັບການເອົາໃຈໃສ່ລົງສູ່ຊົນນະບົດເຂດຫ່າງໄກສອກຫຼີກ, ການເຝົ້າລະວັງ ແລະ ຕອບໂຕ້ຕໍ່ພະຍາດລະບາດຕ່າງໆມີຄວາມກຽມພ້ອມ ແລະ ວ່ອງໄວກວ່າເກົ່າ, ການສະໜອງການບໍລິການ ການປິ່ນປົວມີບາດກ້າວຂະຫຍາຍຕົວໃໝ່. ສັກຢາກັນພະຍາດບັນລຸໄດ້ 73% ຂອງກຸ່ມເປົ້າໝາຍ. ທັງໝົດນີ້ ໄດ້ເຮັດໃຫ້ອັດຕາການຕາຍ ຂອງແມ່ຫຼຸດລົງຈາກ 405 ຄົນໃນປີ 2006 ຍັງເຫຼືອ 300 ຄົນ ຕໍ່ເດັກ ເກີດມີຊີວິດ 100.000 ຄົນ, ອັດຕາການຕາຍຂອງເດັກອາຍຸຕໍ່າກ່ວາ 1 ປີ ຫຼຸດລົງຈາກ 70 ຄົນ ຍັງເຫຼືອ 55 ຄົນ ຕໍ່ ເດັກເກີດມີ ຊີວິດ 1.000 ຄົນ, ອັດຕາການຕາຍຂອງເດັກ ອາຍຸຕໍ່າກ່ວາ 5 ປີ ຫຼຸດລົງ ຈາກ 98 ຄົນຍັງເຫຼືອ 75 ຄົນ ຕໍ່ເດັກເກີດມີຊີວິດ 1.000 ຄົນ, ອັດຕາການ ຊົມໃຊ້ນ້ຳສະອາດ ກວມເອົາ 64,4%, ອັດຕາພົບເຊື້ອໄຂ້ຍຸງຫຼຸດລົງ ຈາກ 20% ໃນປີ 2005 ຍັງເຫຼືອ 9% ໃນປີ 2010, ອັດຕາການຊົມໃຊ້ວິດຖ່າຍ 35,6%, ອາຍຸຍືນສະເລ່ຍ 58 ປີ. ລະດົມທົ່ວສັງຄົມບໍລິຈາກເລືອດ ແລະ ສິ່ງຂອງຕ່າງໆ ໂດຍຜ່ານອົງການກາແດງສະໜອງໃຫ້ແກ່ການປິ່ນປົວ ໃນ 5 ປີຜ່ານມາໄດ້ 1.183 ຖົງ ( ຫຼືເທົ່າກັບ 354,9 ລິດ).

**- ດ້ານຖະແຫຼງຂ່າວ ແລະ ວັດທະນະທຳ:** ພື້ນຖານເຕັກນິກດ້ານ ວຽກງານຖະແຫຼງຂ່າວໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ, ການອອກອາ ກາດຂອງວິທະຍຸກວມເອົາ 50% ແລະ ໂທລະພາບ 70% ຂອງພື້ນທີ່ທົ່ວ ແຂວງ, ຂະຫຍາຍລະບົບໂທລະໂຄ່ງໄປເຖິງທຸກໆໃຈກາງເມືອງກວມເອົາ 27 ບ້ານ, ມີບໍລິການໂທລະພາບໃຊ້ສາຍ 1 ແຫ່ງ ໃນເຂດເທດສະບານແຂວງ. ບັນດາເນື້ອຫາສາລະຂອງຂ່າວ ແລະ ການບັນເທີງໄດ້ຮັບການປັບປຸງດີຂຶ້ນ, ການແລກປ່ຽນຂ່າວສານກັບສູນກາງປົກກະຕິດີກວ່າເກົ່າ. ຄຽງຄູ່ກັນນີ້ ກໍໄດ້ເອົາໃຈໃສ່ບູລະນະສະຖານທີ່ປະຫວັດສາດ ແລະ ບູຮານສະຖານເປັນຕົ້ນ: ເຂດພະທາດເຈົ້າໄຊເສດຖາ, ວັດສະແກະ, ເຂດທີ່ໝັ້ນລາວໃຕ້ ແລະ ແຫ່ງອື່ນໆ. ສ້າງບ້ານວັດທະນະທຳໄດ້ 7 ບ້ານ, ສ້າງຄອບຄົວວັດທະນະທຳໄດ້ 3.754 ຄອບຄົວ, ໄດ້ອະນຸລັກປົກປັກຮັກສາວັດທະນະທຳຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າ, ສ້າງໜ່ວຍສິລະປະສະໝັກຫຼິ້ນໄດ້ 44 ໜ່ວຍ.

**- ດ້ານແຮງງານ ແລະສະຫວັດດີການສັງຄົມ:** ເອົາໃຈໃສ່ກວດກາ ແລະ ຄຸ້ມຄອງການນຳເຂົ້າແຮງງານ ຈາກຕ່າງປະເທດ, ປະຈຸບັນມີແຮງງານ ຕ່າງປະເທດ ທີ່ມາເຄື່ອນໄຫວຢ່າງຖືກຕ້ອງ 1.742 ຄົນ; ສົ່ງໄປຝຶກອົບຮົມວິຊາຊີບ 216 ຄົນ ແລະ ສົ່ງໄປອອກແຮງງານຢູ່ຕ່າງປະເທດໄດ້ຈຳນວນໜຶ່ງ. ປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຄຸນງາມຄວາມດີຕໍ່ການປະຕິວັດ, ຄອບຄົວວິລະຊົນ-

ນັກຮົບແຂ່ງຂັນ, ພະນັກງານອະວຸໂສ-ບຳນານ, ຜູ້ເສຍອົງຄະຢ່າງເໝາະສົມ. ເອົາໃຈໃສ່ຊ່ວຍເຫຼືອຜູ້ເຖົ້າ, ຜູ້ດ້ອຍໂອກາດ ແລະ ຜູ້ຖືກເຄາະຮ້າຍຈາກໄພພິບັດຕ່າງໆ ເປັນມູນຄ່າຈຳນວນຫຼວງຫຼາຍ, ອັນພົ້ນເດັ່ນ ແມ່ນການຊ່ວຍເຫຼືອບັນເທົາທຸກໃຫ້ຜູ້ປະສົບເຄາະຮ້າຍຈາກພະຍຸເກດສະໜາໃນປີຜ່ານມາ ເປັນຕົ້ນ: ສຳເລັດການກໍ່ສ້າງເຮືອນ 400 ກວ່າຫຼັງ, ສະໜອງສະບຽງອາຫານ, ເຄື່ອງໃຊ້ຄົວເຮືອນ, ຢາປົວພະຍາດ, ອຸປະກອນການຜະລິດ ແລະ ອື່ນໆຈຳນວນ 108 ບ້ານ. ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງດຳເນີນການເກັບກູ້ລະເບີດທີ່ບໍ່ທັນແຕກອອກຈາກພື້ນທີ່ການຜະລິດຂອງປະຊາຊົນ ແລະ ເຂດການລົງທຶນໂຄງການຕ່າງໆ ໄດ້ຫຼາຍ ກວ່າ 1.153 ຮຕ, ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 205.334 ຄົນ.

**- ວຽກງານກິລາ-ກາຍຍະກຳ:** ພື້ນຖານໂຄງລ່າງຈຳນວນໜຶ່ງໄດ້ຮັບການກໍ່ສ້າງເປັນຕົ້ນ: ສະໜາມກິລາໃນຮົ່ມ, ສະໜາມກິລາເປຕັງ. ສາມາດສົ່ງນັກກິລາເຂົ້າຮ່ວມແຂ່ງຂັນລະດັບຕ່າງໆ ເປັນຕົ້ນ: ກິລາຊີເກມຄັ້ງທີ 25, ກິລາແຫ່ງຊາດ ຄັ້ງທີ 6 ແລະທີ 7, ການແຂ່ງຂັນໝູນວຽນໃນ 4 ແຂວງພາກ ໃຕ້, ວັນກຳເນີດກິລາລາວ ແລະ ການ ແຂ່ງຂັນລາຍການອື່ນໆ. ອັນພົ້ນເດັ່ນແມ່ນສາມາດຍາດໄດ້ 1 ຫຼຽນຄຳຈາກກິລາເປຕັງຍິງ ເຊິ່ງໄດ້ສ້າງຊື່ສຽງໃຫ້ແກ່ແຂວງອັດຕະປື ກໍຄື ສປປ ລາວ.

**- ວຽກງານວິທະຍາສາດ ແລະ ເຕັກໂນໂລຊີ:** ອັນພົ້ນເດັ່ນແມ່ນ ແຕ່ລະພະແນກການ ໄດ້ເລີ່ມຕົ້ນຫັນ ເຂົ້າສູ່ການນຳໃຊ້ເຕັກນິກ-ເຕັກໂນໂລຊີໃໝ່ດ້ານການສື່ສານ ເພື່ອຮັບໃຊ້ວຽກວິຊາສະເພາະຂອງຕົນ ເປັນຕົ້ນ: ການສົ່ງຂໍ້ມູນດ້ວຍລະບົບອິນເຕີເນັດ. ການບໍລິການດ້ານການເງິນຜ່ານລະບົບອີເລັກໂທນິກ. ການຄຸ້ມຄອງບໍລິຫານລັດແບບອີເລັກໂທນິກ (E-Gov) ແລະ ການຕິດຊັ່ງແບບມີມາດຖານ.

**- ວຽກງານຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ** ໄດ້ສຸມໃສ່ສ້າງ ຈິດສຳນຶກດ້ານສິ່ງແວດລ້ອມ ໃຫ້ແກ່ຊຸມຊົນຕິດພັນກັບການພັດທະນາຕົວເມືອງ ໂດຍສະເພາະເຂດເທດສະບານແຂວງກຳນົດສະຖານທີ່ຖິ້ມຂີ້ເຫຍື້ອ ແລະ ການອະນາໄມ. ເອົາໃຈໃສ່ປະສານສົມທົບໃນການຄຸ້ມຄອງ, ກວດກາ ແລະ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມຈາກໂຄງການລົງທຶນຕ່າງໆ; ສະໜອງຂໍ້ມູນເບື້ອງຕົ້ນກ່ຽວກັບອຸຕຸນິຍົມ ແລະອຸທົກກະສາດ, ປະສານງານ ໂຄງການອະນຸລັກສິ່ງແວດລ້ອມ ເຂດເຊື່ອມຕໍ່ປ່າສະຫງວນແຫ່ງຊາດ,ການສຳຫຼວດເຂດອ່າງໂຕ່ງແລະແຫຼ່ງນ້ຳ ໂດຍສະເພາະອ່າງເຊກອງ.

**- ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ:** ແຂວງ ໄດ້ກຳນົດເອົາ 4 ບ້ານໃຫຍ່ ແລະ 26 ກຸ່ມບ້ານ ເພື່ອສ້າງເປັນກຸ່ມບ້ານພັດທະນາ; ສ້າງຕົວແບບ 2 ກຸ່ມບ້ານຄື: ກຸ່ມບ້ານພະເມືອງ ແລະ ກຸ່ມບ້ານຮົມ. ນອກນັ້ນ, ແຂວງຍັງໄດ້ກຳນົດຈຸດສຸມພັດທະນາຕື່ມອີກ 11 ກຸ່ມບ້ານ. ສົມທົບກັບສູນກາງໃນການພັດທະນາເຂດວັງຕັດຊາຍແດນລາວ-ຫວຽດນາມ, ກະຊວງຫັນເອົາກຸ່ມບ້ານນ້ຳກົງສ້າງເປັນໃຈກາງເມືອງພູວົງໃນ 5 ປີ ຕໍ່ໜ້າ. ຄຸ້ມຄອງນຳໃຊ້ໂຄງການຊ່ວຍເຫຼືອຈາກສາກົນ ເພື່ອພັດທະນາ ແລະ ແກ້ໄຂຄວາມທຸກຍາກຢູ່ 3 ເມືອງເປົ້າໝາຍ: ໄຊເສດຖາ, ຊານໄຊ, ພູວົງ ແລະ ທຶນຈຳນວນໜຶ່ງຕື່ມອີກຈາກລັດຖະບານເພື່ອສ້າງເປັນກອງທຶນພັດທະນາ ແລະ ກໍ່ສ້າງໂຄງລ່າງພື້ນຖານອັນຈຳເປັນຢູ່ກຸ່ມບ້ານ.

ທັງໝົດນີ້ ໄດ້ເຮັດໃຫ້ສະພາບຄວາມທຸກຍາກຂັ້ນພື້ນຖານໄດ້ຮັບການແກ້ໄຂຕາມທິດທີ່ໄດ້ກຳນົດໄວ້ຄື: ການຜະລິດສະບຽງອາຫານ, ການສຶກສາ ແລະ ບໍລິການສາທາລະນະສຸກ, ການເຂົ້າເຖິງຊຸມຊົນດ້ວຍການສ້າງໂຄງລ່າງທີ່ຈຳເປັນໂດຍສະເພາະເສັ້ນທາງ. ມາຮອດປະຈຸບັນຄາດຄະເນຄອບຄົວທຸກຍາກຈະຍັງເຫຼືອປະມານ 3.910 ຄອບຄົວ ຫຼື ເທົ່າກັບ18%ຂອງ ຈຳນວນຄົວເຮືອນທັງໝົດຫຼຸດຈາກປີ 2005 ປະມານ 1.442 ຄົວເຮືອນ.

**6. ວຽກບູລະນະກົງຈັກ ແລະ ການບໍລິຫານຄຸ້ມຄອງລັດ.**

- ສຳເລັດການປັບປຸງສັບຊ້ອນພະນັກງານ ແລະ ກົງຈັກການຈັດຕັ້ງຂັ້ນຕ່າງໆໃນທົ່ວແຂວງ ໄດ້ແບ່ງເມືອງເປັນ 2 ປະເພດຄື: ເມືອງສາມັກຄີໄຊ ແລະ ເມືອງໄຊເສດຖາເປັນເມືອງປະເພດ 2, ສ່ວນ 3 ເມືອງ ຄື: ສະໜາມໄຊ, ຊານໄຊ ແລະ ພູວົງເປັນເມືອງປະເພດ 3, ໃນນີ້ໄດ້ທົດລອງການໂຮມ ບັນດາຫ້ອງການຈຳນວນໜຶ່ງເຂົ້າກັນ ເພື່ອແນໃສ່ຫຼຸດຜ່ອນຂັ້ນຕອນ ແລະ ຄ່າສິ້ນເປືອງບໍລິຫານ. ດ້ານການກໍ່ສ້າງພະນັກງານສາມາດເປີດຮຽນທິດສະດີການເມືອງ-ການປົກຄອງຊັ້ນກາງລະບົບ 15 ເດືອນໄດ້ 3 ຊຸດ ມີຜູ້ເຂົ້າຮຽນ 151 ຄົນ, ຍິງ 26 ຄົນ; ຈັດຮຽນພື້ນຖານທິດສະດີການເມືອງຊັ້ນຕົ້ນ 3 ເດືອນໄດ້ 2 ຊຸດ ມີຜູ້ເຂົ້າຮຽນ 211 ຄົນ, ຍິງ 48 ຄົນ. ສົ່ງໄປຮຽນທິດສະດີຊັ້ນສູງ ແລະ ວິຊາສະເພາະຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດ 230 ຄົນ, ຍິງ 35 ຄົນ.

**- ວຽກນິຕິບັນຍັດ, ຕຸລາການ ແລະຍຸຕິທຳ:** ໄດ້ສຸມໃສ່ໂຄສະນາເຜີຍ ແຜ່ກົດໝາຍດ້ວຍຫຼາຍຮູບການໃຫ້ແກ່ ພະນັກງານ , ທະຫານ-ຕຳຫຼວດ ແລະ ປະຊາຊົນ; ປະກອບສ່ວນໃນການສ້າງບ້ານ ແລະ ກຸ່ມບ້ານພັດທະນາເປັນ ຕົ້ນ: ສ້າງບ້ານປອດຄະດີ, ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ. ປັບປຸງລະບົບການຈັດຕັ້ງຂອງສານ ແລະ ໄອຍະການປະຊາຊົນ ແບ່ງເປັນ 2 ຂັ້ນ ຄື: ສານ, ໄອ

ຍະການເຂດ ແລະ ສານ, ໄອຍະການຂັ້ນແຂວງ, ເອົາໃຈໃສ່ກວດກາການຮ້ອງຟ້ອງ, ການຈັດຕັ້ງປະຕິບັດຄຳຕັດສິນຄະດີຂອງສານ, ການສືບສວນສອບສວນຂອງເຈົ້າໜ້າທີ່, ທີ່ກ່ຽວຂ້ອງ ແລະ ຄຳຕັດສິນຂອງສານ. ສ້າງນັກກົດໝາຍຊຸ້ມຕົ້ນລະບົບ 3 ເດືອນຢູ່ຂັ້ນບ້ານ ແລະ ກຸ່ມບ້ານ ມີ 2 ຈຸດ, ລວມມີ 90 ກວ່າຄົນ. ຢັ້ງຢືນເອກະສານຕາມສັນຍາຖືກຕ້ອງຕາມກົດໝາຍ ແລະ ຈັດຕັ້ງຄຳພິພາກສາ, ຄຳຕັດສິນ ແລະ ຄຳຊີ້ຂາດ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ.

**7. ການເປີດກວ້າງການພົວພັນຕ່າງປະເທດ ແລະ ຮ່ວມມືສາກົນ.**

ພວກເຮົາສາມາດເປີດກວ້າງການພົວພັນກັບຕ່າງປະເທດໄດ້ຫຼາຍກວ່າເກົ່າ, ເປັນຕົ້ນແມ່ນເພື່ອນຍຸດທະສາດ ສສ ຫວຽດນາມ, ຈາກບັນດາແຂວງໃກ້ຄຽງໃນເມື່ອກ່ອນມາເປັນ 10 ແຂວງ ແລະ 2 ນະຄອນໃນປະຈຸບັນ ແລະ ມີການພົວພັນທີ່ດີກັບແຂວງທີ່ໃກ້ຄຽງຂອງລາຊະນາຈັກກຳປູເຈຍ, ສປ ຈີນ, ຣາຊະອານາຈັກໄທ, ສ ເກົາຫຼີ, ມົງໂກລີ, ຍີ່ປຸ່ນ ແລະ ຄຸ້ມຄອງບັນດາອົງການຈັດຕັ້ງສາກົນ ທີ່ປະຕິບັດໜ້າທີ່ວຽກງານຢູ່ແຂວງພວກເຮົາໄດ້ຮັດກຸມກວ່າເກົ່າ; ອັນທີ່ພົ້ນເດັ່ນ ພວກເຮົາສາມາດຍົກລະດັບດ່ານພູເກືອ ຂຶ້ນເປັນດ່ານສາກົນ, ເຮັດໃຫ້ບັນດານັກທຸລະກິດ, ນັກທ່ອງທ່ຽວ (ນັບທັງພາຍໃນ ແລະ ຕ່າງປະເທດ) ນັບມື້ນັບຫຼາຍຂຶ້ນ, ທັງມີຄວາມສະດວກໃນການອອກວີຊາກັບດ່ານໄດ້ຫຼາຍກວ່າ 350 ເທື່ອຄົນ, ອັນທີ່ສຳຄັນອີກ ແມ່ນພວກເຮົາສາມາດຈັດຕັ້ງປະຕິບັດວຽກງານປັກຫຼັກໝາຍຖີ່ ແລະ ບູລະນະລະບົບຫຼັກໝາຍຊາຍແດນລາວ-ຫວຽດນາມ ຮ່ວມກັບແຂວງກອນຕູມໄດ້ສຳເລັດ, ອັນໄດ້ປະກອບສ່ວນເຮັດໃຫ້ສະຖຽນລະພາບທາງດ້ານການເມືອງມີຄວາມສະຫງົບຢ່າງໜັກແໜ້ນ.

**8. ວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບສຸກ:**

ໃນ 5 ປີ ຜ່ານມາບັນດາກຳລັງປະກອບອາວຸດຂອງແຂວງມີການ ພັດທະນາຢ່າງຕໍ່ເນື່ອງ; ການປັບປຸງກໍ່ ສ້າງກຳລັງໄດ້ມີບາດກ້າວຂະຫຍາຍຕົວຢ່າງໜັກແໜ້ນ, ລະບົບຄ້າຍຄູ, ສະໜາມຝຶກແອບ ແລະ ຊີວິດການເປັນ ຢູ່ຂອງພະນັກງານນັກຮົບໄດ້ຮັບການປັບປຸງດີຂຶ້ນ. ສາມາດຮັບປະກັນສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ. ທັງໝົດນີ້ໄດ້ເອື້ອອຳນວຍຄວາມສະດວກໃຫ້ແກ່ການສົ່ງເສີມການຄ້າການລົງທຶນ, ການທ່ອງທ່ຽວມີທ່າຂະຫຍາຍຕົວເພີ່ມຂຶ້ນ.

**ສະຫຼຸບຕີລາຄາລວມ:**

ເຖິງວ່າຈະໄດ້ຮັບຜົນສະທ້ອນຈາກສະພາບໄພທຳມະຊາດ ແລະ ສະພາບເສດຖະກິດ-ການເງິນ ສາກົນ ຢ່າງຕໍ່ເນື່ອງກໍ່ຕາມ, ແຕ່ໂດຍລວມ ແລ້ວ ພື້ນຖານໂຄງລ່າງເສດຖະກິດ ແລະ ວັດທະນະທຳ-ສັງຄົມຂອງແຂວງ ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ, ເປັນຕົ້ນ ລະບົບເສັ້ນທາງ, ຊົນລະປະທານ, ໂຮງຮຽນ, ໂຮງໝໍ, ການສື່ສານ ແລະ ອື່ນໆບວກກັບສະພາບເສດຖະກິດມະຫາພາກຂອງປະເທດມີຄວາມໜັກແໜ້ນ ເຂັ້ມແຂງກວ່າຊຸມປີຜ່ານມາ, ສ້າງໂອກາດໃຫ້ພາກທຸລະກິດມີການເຕີບໂຕ ແລະ ມີຄວາມສົນໃຈລົງທຶນເພີ່ມຂຶ້ນ, ບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນໃຫ້ການສະໜັບສະໜູນອຸ້ມຊູ. ທັງໝົດນີ້ຊ່ວຍໃຫ້ອັດຕາການເຕີບໂຕຂອງ GDP ບັນລຸສູງກວ່າຄາດໝາຍວາງໄວ້. ການຜະລິດຂະໜາດໃຫຍ່ ແລະ ເປັນສິນຄ້າເລີ່ມເປັນຮູບເປັນຮ່າງຂຶ້ນເທື່ອລະກ້າວ ເຊັ່ນ: ການປູກຢາງພາລາ, ການກໍ່ສ້າງເຂື່ອນໄຟຟ້າ; ການທ່ອງທ່ຽວ ແລະ ການບໍລິການຜ່ານເລີ່ມເປັນຮູບປະທຳຈະແຈ້ງຂຶ້ນ.

ແຕ່ຄຽງຄູ່ກັນນັ້ນ, ກໍຍັງມີຫຼາຍດ້ານ ທີ່ຍັງຄົງຄ້າງທີ່ຈະຕ້ອງເອົາໃຈ ໃສ່ເຊັ່ນ: ການກຳນົດ ແລະ ຈັດສັນພື້ນ ທີ່ດິນໃຫ້ກາຍເປັນທຶນນັບທັງລະດັບມະຫາພາກ ແລະ ຈຸລະພາກຍັງບໍ່ທັນຊັດເຈນ; ການປັບປຸງພື້ນຖານວັດຖຸເຕັກນິກທີ່ຮັບໃຊ້ໃຫ້ແກ່ການຜະລິດກະສິກຳໃຫ້ກາຍເປັນສິນຄ້າ ເປັນຕົ້ນ: ລະບົບຊົນລະປະທານ, ການບໍລິການ ແລະ ສົ່ງເສີມເຕັກນິກວິຊາການ, ການສົ່ງເສີມຜະລິດແບບເປັນຟາມ ທີ່ຮັບປະກັນປະລິມານ ແລະ ຄຸນນະ ພາບໃຫ້ແກ່ ຕະຫຼາດຍັງບໍ່ທັນຄົບຊຸດ; ການສົ່ງເສີມການປຸງແຕ່ງຜະລິດຕະພັນກະສິກຳ-ປ່າໄມ້ ແລະ ການສົ່ງອອກຍັງບໍ່ທັນໜັກແໜ້ນ, ການສົ່ງອອກ ຍັງແມ່ນໃນຮູບແບບວັດຖຸດິບ; ການປັບຄຸນນະພາບການສຶກສາ ແລະ ການບໍລິການສາທາລະນະສຸກຍັງບໍ່ທັນສົມຄູ່ກັບການກໍ່ສ້າງພື້ນຖານໂຄງລ່າງ ເປັນຕົ້ນ: ດ້ານບຸກຄະລາກອນຍັງບໍ່ທັນພຽງພໍ, ລະດັບເຕັກນິກວິຊາການບໍ່ສູງ, ການສະໜອງອຸປະກອນຍັງບໍ່ທັນຄົບຖ້ວນ. ຍັງເກີດມີສະພາບເຫຼືອບໍ່ພໍ ລະຫວ່າງເດັກໃນເກນອາຍຸກັບຫ້ອງຮຽນ (ຢູ່ເຂດຕົວເມືອງນັກຮຽນລົ້ນຫ້ອງ, ສ່ວນຢູ່ຊົນນະບົດຫ້ອງຮຽນເຫຼືອນັກຮຽນ). ການນຳໃຊ້ສຸກສາລາ ແລະ ໂຄສະນາສຸຂະສຶກສາຍັງບໍ່ທັນໄດ້ດີ, ຄວາມຮັບຮູ້ເຂົ້າໃຈຂອງປະຊາຊົນຕໍ່ວຽກປ້ອງກັນພະຍາດ ແລະ ຮັກສາສຸຂະພາບຍັງບໍ່ທັນເລິກເຊິ່ງ ເຊິ່ງເຫັນວ່າເມື່ອມີພະຍາດລະບາດເກີດຂຶ້ນບໍ່ທັນສາມາດສະກັດກັ້ນໄດ້ຢ່າງທັນການ. ການສ້າງບຸກຄະລາກອນ, ການພັດທະນາສີມືແຮງງານທຽບໃສ່ໂຄງການຕ່າງໆ ທີ່ໄດ້ຮັບອະນຸຍາດລົງທຶນຍັງບໍ່ທັນສົມຄູ່ກັນ.

ການຈັດແບ່ງຄວາມຮັບຜິດຊອບໃນການບໍລິຫານລັດ ຍັງບໍ່ທັນຊັດ ເຈນ ຍັງເກີດມີສະພາບເຮັດວຽກຊໍ້າ ຊ້ອນກັນ. ການຄຸ້ມຄອງເສດຖະກິດມະຫາພາກຍັງບໍ່ທັນໜັກແໜ້ນເຂັ້ມແຂງເທົ່າທີ່ຄວນ, ເປັນຕົ້ນການເກັບລາຍ ຮັບບໍ່ສົມຄູ່ກັບການເຕີບໂຕຂອງເສດຖະກິດ, ການອະນຸມັດລົງທຶນລ່ວງ ໜ້າເກີນຄວາມສາມາດຮອງຮັບຂອງເສດຖະກິດ ແລະ ການເງິນ ໂດຍສະເພາະໂຄງການຕັດຕາຜ້າກຸ່ມບ້ານ, ຄຽງຄູ່ກັນນີ້ ກໍມີຫຼາຍໂຄງການຍັງຂາດການ ຄຸ້ມຄອງນຳໃຊ້ທີ່ດີ; ລະບົບຂໍ້ມູນຂ່າວສານສະຖິຕິຍັງອ່ອນແອບໍ່ທັນເປັນເອກະພາບ, ການສົ່ງເສີມການລົງທຶນໄດ້ ແຕ່ປະລິມານສ່ວນການຈັດຕັ້ງປະຕິບັດຕົວຈິງຍັງເຮັດໄດ້ໜ້ອຍ ແລະ ມີຫຼາຍໂຄງການທີ່ອະນຸມັດລົງທຶນຂັ້ນແຂວງ ບໍ່ສອດຄ່ອງກັບລະບຽບກົດໝາຍ.

## ພາກທີ II:
## ທິດທາງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015)

### 1. ຄາດຄະເນສະພາບແວດລ້ອມພາຍໃນ ແລະ ສາກົນ:

ໂດຍລວມແລ້ວ ສະພາບພາຍໃນປະເທດ ຍັງຈະສືບຕໍ່ເອື້ອອຳນວຍ ຄວາມສະດວກ ໃຫ້ແກ່ການພັດທະນາແຂວງພວກເຮົາ ເປັນຕົ້ນ: ການໃຫ້ນະໂຍບາຍພິເສດແກ່ເຂດ 3 ຫຼ່ຽມພັດທະນາລາວ-ຫວຽດນາມ-ກຳປູເຈຍ, ໂຄງການລົງທຶນຂະໜາດກາງ, ຂະໜາດໃຫຍ່ຈຳນວນໜຶ່ງໄດ້ສຳເລັດສາມາດປະກອບສ່ວນທຶນຮອນໃຫ້ແກ່ປະເທດ ແລະ ມີບູລິມະສິດສຳລັບການ ແກ້ໄຂຄວາມທຸກຍາກ ເປັນຕົ້ນ: ໂຄງການນໍ້າເທີນ 2. ສະເພາະຢູ່ພາຍໃນ ແຂວງ ໂຄງການບູລິມະສິດຈຳນວນໜຶ່ງ ຄາດວ່າຈະກໍ່ສ້າງສຳເລັດ ເຊັ່ນ: ທາງເຂດຊາຍແດນ, ເຂດວັງຕັດ, ໂຮງໝໍທັນສະໄໝ, ໂຄງການປູກຢາງພາລາ ແລະ ອື່ນໆ.

ສຳລັບສະພາບຂອງເຂດ 3 ຫຼ່ຽມພັດທະນາ ລາວ-ຫວຽດນາມ-ກຳ ປູເຈຍ ໂດຍສະເພາະເບື້ອງກຳປູເຈຍ ຈະມີທ່າກ້າວຂະຫຍາຍຕົວໃໝ່, ສະພາບການຮ່ວມມືຂອງບັນດາປະເທດອາຊຽນ, ປະເທດລຸ່ມແມ່ນໍ້າຂອງຍັງ ຈະຂະຫຍາຍຕົວໄປໃນທິດທາງບວກ.

ແຕ່ເຖິງແນວໃດກໍຕາມ, ພວກເຮົາກໍຍັງມີຄວາມສ່ຽງ ແລະ ສິ່ງທ້າທາຍຫຼາຍປະການຕົ້ນຕໍມີ ຄື: (1). ໄພທຳມະຊາດ, (2). ລະດັບຄວາມຮູ້ຄວາມສາມາດ ຄວາມເຂົ້າໃຈຂອງປະຊາຊົນ ແລະ ພະນັກງານ, ແລະ (3). ກົນໄກການຄຸ້ມຄອງບໍລິຫານລັດທີ່ຍັງຊັກຊ້າ, ສັບສົນ ໃນການແບ່ງຂັ້ນຄຸ້ມຄອງລະຫວ່າງຂະແໜງການ ແລະ ລະຫວ່າງແຂວງກັບເມືອງ.

### 2. ທິດທາງ ແລະ ໜ້າທີ່ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VII.

1) ປະກອບສ່ວນອັນສຳຄັນ ໃຫ້ແກ່ການຮັບປະກັນສະຖຽນລະພາບທາງດ້ານການເມືອງ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສຸກພາຍໃນທ້ອງຖິ່ນເພື່ອເປັນພື້ນຖານໃຫ້ແກ່ການເຕີບໂຕຂອງເສດຖະກິດ.

ຮັບປະກັນການພັດທະນາແບບບຸທະລຸ ເພື່ອເຮັດໃຫ້ເສດຖະກິດມີ ການຂະຫຍາຍຕົວໄວກວ່າເກົ່າ, ໂດຍຂຸດຄົ້ນນຳໃຊ້ຄວາມອາດສາມາດບົ່ມຊ້ອນທີ່ຕິດພັນກັບກາລະໂອກາດແຕ່ລະໄລຍະ ຕົ້ນຕໍແມ່ນການສ້າງຜະລິດຕະພັນກະສິກຳ-ປ່າໄມ້ ໃຫ້ກາຍເປັນສິນຄ້າ ແລະ ເປັນພື້ນຖານໃຫ້ແກ່ອຸດສາຫະກຳປຸງແຕ່ງ, ສ້າງລາຍຮັບທາງກົງໃຫ້ປະຊາຊົນ ເພື່ອປັບປຸງຊີວິດການເປັນຢູ່ດີຂຶ້ນຢ່າງຈະແຈ້ງ.

2) ສືບຕໍ່ກໍ່ສ້າງພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ໃຫ້ເປັນລະບົບຄົບຊຸດ ໂດຍສະເພາະແມ່ນໂຄງລ່າງກະສິກຳ, ການຂົນສົ່ງ, ການທ່ອງ ທ່ຽວ, ການສຶກສາ, ສາທາລະນະສຸກ, ວັດທະນະທຳ...

3) ເອົາໃຈໃສ່ການພັດທະນາບ້ານ ແລະ ກຸ່ມບ້ານ ຕິດພັນກັບການຈັດສັນອາຊີບຄົງທີ່ ເພື່ອແກ້ໄຂຄວາມ ທຸກຍາກ, ຫຼຸດຜ່ອນການແຕກໂຕນກັນລະຫວ່າງຕົວເມືອງ ແລະ ຊົນນະບົດຢ່າງມີຈຸດສຸມ; ສືບຕໍ່ສ້າງກຸ່ມບ້ານ ທີ່ໄດ້ລົງທຶນພັດທະນາຜ່ານມານັ້ນ ໃຫ້ກາຍເປັນຕົວເມືອງນ້ອຍ ແລະ ສ້າງກຸ່ມບ້ານນໍ້າກົງເປັນສຳນັກງານໃໝ່ຂອງເມືອງພູວົງ ໃຫ້ປະກົດຜົນເປັນຈິງ.

4) ພັດທະນາຕົວເມືອງສາມັກຄີໄຊ ໃຫ້ກາຍເປັນເທດສະບານແຂວງ ທີ່ຮັບປະກັນລະບົບສາທາລະນຸປະໂພກພື້ນຖານ ເຊັ່ນ: ຫໍວັດທະນະ ທຳ ແລະ ປະຊຸມ, ຫໍວາງສະແດງ, ທາງ 4 ເລນ, ສວນສາທາລະນະ, ລະ ບົບໄຟອຳນາດ, ໄຟປະດັບ, ການອະນາໄມສິ່ງແວດລ້ອມ. ປູກຈິດສຳນຶກໃຫ້ພົນລະເມືອງໃນເຂດດັ່ງກ່າວມີການສຶກສາ, ວັດທະນະທຳ, ຮັກສາຮະນີບທຳນຽມຮີດຄອງປະເພນີ ແລະ ສະແຫວງຫາການພັດທະນາສິ່ງໃໝ່ໆ, ປະລະແນວຄິດທ້ອງຖິ່ນຄອງເດີມ, ມີຈິດໃຈສາກົນກຳມະຊີບອັນຜ່ອງໃສ.

5) ສືບຕໍ່ພັດທະນາ ຊັບພະຍາກອນມະນຸດ, ສ້າງໃຫ້ມີຊ່ຽວຊານ ແລະ ນັກຄົ້ນຄວ້າ, ນັກທຸລະກິດທີ່ເກັ່ງຂອງແຂວງ. ສ້າງໃຫ້ນັກຮຽນຄອງອັນດັບຕົ້ນໆໃນການສອບເສັງນັກຮຽນເກັ່ງທົ່ວປະເທດ; ຍົກສູງຄວາມສະເໝີ ພາບຍິງ-ຊາຍ ແລະ ຮັບປະກັນ-ຄວາມຍຸຕິທຳໃນສັງຄົມ.

6) ປັບປຸງລະບົບການຄຸ້ມຄອງບໍລິຫານລັດ ໃຫ້ມີຄວາມໂປ່ງໃສ, ວ່ອງໄວ ແລະ ພະນັກງານມີຄວາມຮັບຜິດຊອບສູງ ເພື່ອອຳນວຍຄວາມສະດວກ ແລະ ບໍລິການສັງຄົມ, ປະຕິບັດລະບຽບລັດຖະກອນຢ່າງເຂັ້ມງວດ; ຫັນໄປສູ່ການນຳໃຊ້ເຕັກນິກ-ເຕັກໂນໂລຊີໃໝ່ໃນການບໍລິຫານລັດ.

7) ຄົ້ນຄວ້າ ແລະນຳໃຊ້ບັນດາທ່າແຮງເພື່ອໃຫ້ກາຍເປັນທຶນ ເປັນຕົ້ນ: ດິນ, ນ້ຳ, ສາມປະເພດປ່າໄມ້, ແຫຼ່ງທ່ອງທ່ຽວທີ່ເປັນເອກະລັກສະເພາະເຊັ່ນ: ໜອງຟ້າ.

8) ສົ່ງເສີມເສດຖະກິດຫຼາຍພາກສ່ວນ, ຕົ້ນຕໍແມ່ນສ້າງນັກທຸລະກິດທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ, ສາມາດກ້າວໄປສູ່ການແຂ່ງຂັນໃນລະ ດັບ 4 ແຂວງພາກໃຕ້ ແລະ ລະດັບປະເທດ ກໍຄືບັນດາແຂວງຂອງປະເທດໃກ້ຄຽງ. ສົ່ງເສີມການສ້າງຕັ້ງວິສາຫະກິດຂະໜາດນ້ອຍ ແລະ ກາງ(SME) ເພື່ອເປັນຕະຫຼາດໃຫ້ແກ່ການຜະລິດກະສິກຳຂອງປະຊາຊົນ ແລະ ການສ້າງລາຍຮັບງົບປະມານຂອງແຂວງ.

9) ສືບຕໍ່ປະຕິບັດນະໂຍບາຍເປີດກວ້າງ ແລະ ຍົກປະສິດທິພາບ ການພົວພັນຮ່ວມມືກັບຕ່າງປະເທດໂດຍສະເພາະຮັກສາມູນເຊື້ອການຮ່ວມມືກັບບັນດາແຂວງແຮກສ່ຽວ, ແຂວງພາກກາງ ແລະ ພາກໃຕ້ ຫວຽດນາມ ບົນຈິດໃຈສາມັກຄີພິເສດ ແລະ ຮ່ວມມືຮອບດ້ານ, ປະຕິບັດ 12 ນະໂຍບາຍ ໃນກອບສາມຫຼ່ຽມພັດທະນາ ລາວ-ຫວຽດນາມ-ກຳປູເຈຍ ໃຫ້ປະກົດຜົນເປັນຈິງ. ເປີດກວ້າງການຮ່ວມມືກັບແຂວງຕ່າງໆຈາກ ສ.ປ ຈີນ, ກຳປູເຈຍ, ໄທ, ມົງໂກນ ກໍຄືບັນດາຜູ້ໃຫ້ທຶນສາກົນອື່ນໆ.

**3. ຄາດໝາຍສູ້ຊົນ:**

**3.1 ຄາດໝາຍສູ້ຊົນດ້ານເສດຖະກິດມະຫາພາກ:**

ສູ້ຊົນເຮັດໃຫ້ອັດຕາການເຕີບໂຕ ຂອງລວມຍອດຜະລິດຕະພັນ ພາຍໃນ (GDP) ເພີ່ມຂຶ້ນສະເລ່ຍ 12,5% ຕໍ່ປີ. ໃນນັ້ນ: ກະສິກຳ-ປ່າໄມ້ ເພີ່ມຂຶ້ນ 13,6%, ອຸດສາຫະກຳເພີ່ມຂຶ້ນ 13,8% ແລະ ການບໍລິການເພີ່ມ ຂຶ້ນບໍ່ຫຼຸດ 9,8%. ເມື່ອຮອດປີ 2015 ຄາດຄະເນມູນຄ່າເພີ່ມຂອງ GDP ຕາມລາຄາໃນປີ ປະມານ 1.124 ຕື້ກີບ. ໂຄງປະກອບຂອງ GDP ໃນປີ 2015: ກະສິກຳ-ປ່າໄມ້ ກວມປະມານ 33%, ອຸດສາຫະກຳ ກວມປະມານ 39% ແລະ ການບໍລິການ ກວມປະມານ 28%.

- ຮອດປີ 2015 ຄາດຄະເນພົນລະເມືອງ 136.703 ຄົນ, ເພີ່ມຂຶ້ນ ສະເລັ່ຍ 2,0% ຕໍ່ປີ ແລະ ສະເລ່ຍ GDP ໃສ່ຫົວຄົນ ຈະໄດ້ປະມານ 8,2 ລ້ານກີບ (ເພີ່ມຂຶ້ນປະມານ 3 ລ້ານກີບ) ຫຼື ເທົ່າກັບປະມານ 1.000 ໂດລາ ສາຫະລັດ.

- ຄາດຄະເນລາຍຮັບງົບປະມານທັງໝົດ 272,5 ຕື້ກີບ; ໃນນີ້ ບ້ວງ ລາຍຮັບຂອງແຂວງ ສັງລວມ 5 ປີ 2011-2015 ຈະໄດ້ໄດ້ປະມານ 202,8 ຕື້ກີບ, ສະເລັ່ຍເພີ່ມຂຶ້ນ 5-10 % ຕໍ່ປີ, ທຽບໃສ່ໄລຍະ 5 ປີກ່ອນ ເພີ່ມຂຶ້ນ 32,8%. ລາຍຮັບບ້ວງສູນກາງ 69,6 ຕື້ກີບ, ເພີ່ມຂຶ້ນ 61%. ຄາດຄະເນ ລວມຍອດລາຍຈ່າຍງົບປະມານບັນລຸ 585,10 ຕື້ກີບ; ໃນນີ້ ຈ່າຍເພື່ອການລົງທຶນປະມານ 290 ຕື້ກີບ. ຄາດຄະເນງົບປະມານຈະຂາດດຸນ ປະມານ 393,13 ຕື້ກີບ;

- ລວມຍອດມູນຄ່າການສົ່ງອອກ 5 ປີ 32 ລ້ານໂດລາສະຫາລັດ, ເພີ່ມຂຶ້ນສະເລ່ຍ ປະມານ 4-5% ຕໍ່ປີ; ລວມຍອດການນຳເຂົ້າໃນ 5 ປີ 49,64 ລ້ານໂດລາສະຫາລັດ, ເພີ່ມຂຶ້ນສະເລ່ຍປະມານ 5-6%ຕໍ່ປີ.

**3.2. ຄາດໝາຍທາງດ້ານສັງຄົມ ແລະເປົ້າໝາຍສະຫັດສະຫວັດການພັດທະນາ (MDGs):**

- ສູ້ຊົນຫຼຸດຜ່ອນອັດຕາຄົວເຮືອນທຸກຍາກໃຫ້ລົງຕ່ຳກວ່າ 10% ໃນປີ 2015 (ຂອງປະເທດ ແມ່ນ 15% ແລະຂອງ ສປຊ ກຳນົດແມ່ນ 24%) .

- ຍົກອັດຕາເຂົ້າຮຽນສຸດທິຊັ້ນປະຖົມ ໃຫ້ໄດ້ 98%; ອັດຕາການຮູ້ ໜັງສືໃນກຸ່ມອາຍຸ 15-24 ປີ ໃຫ້ໄດ້ 99%.

- ລົບລ້າງຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ຢູ່ໃນການສຶກສາ ທຸກລະດັບໃຫ້ໄດ້ 100%.

- ຫຼຸດອັດຕາສ່ວນການຕາຍຂອງແມ່ໃຫ້ຕ່ຳກວ່າ 260 ຄົນ ຕໍ່ເດັກເກີດມີຊີວິດ 100.000 ຄົນ.

- ຫຼຸດຜ່ອນອັດຕາສ່ວນການຕາຍຂອງເດັກລຸ່ມ 1 ປີ ໃຫ້ໄດ້ 45 ຄົນ ຕໍ່ເດັກເກີດມີຊີວິດ 1.000 ຄົນ, ອາຍຸຕ່ຳກວ່າ 5 ປີ ໃຫ້ໄດ້ 55 ຄົນ ຕໍ່ເດັກເກີດມີຊີວິດ 1.000 ຄົນ

- ສະໜອງນ້ຳສະອາດໃຫ້ປະຊາຊົນຢູ່ເຂດຊົນນະບົດໃຫ້ໄດ້ 80% ແລະ ອັດຕາການຊົມໃຊ້ວິດຖ່າຍກວມເອົາ 50%.

- ສ້າງຄູ່ຮ່ວມງານດ້ານການພັດທະນາໃນຂອບເຂດທົ່ວໂລກ: ເຮັດໃຫ້ປະຊາຊົນໄດ້ນຳໃຊ້ເຕັກໂນໂລຢີໃໝ່ ເຊັ່ນ: ການເຂົ້າເຖິງລາຍການວິທະຍຸກະຈາຍສຽງ, ການເຂົ້າເຖິງການຮັບຊົມໂທລະພາບ, ການນຳໃຊ້ໂທລະສັບ ແລະ ການເຂົ້າເຖິງການນຳໃຊ້ອິນເຕີແນັດ.

- ຍົກສູງອັດຕາສ່ວນປ່າປົກຫຸ້ມໃຫ້ຫຼາຍກວ່າ 70% ຂອງເນື້ອທີ່ປ່າ ໄມ້ທຳມະຊາດ.

- ຢຸດຕິການຖາງປ່າເຮັດໄຮ່ເລື່ອນລອຍໃຫ້ສຳເລັດໂດຍພື້ນຖານ

**4. ທິດທາງການດຸນດ່ຽງເສດຖະກິດມະຫາພາກ:**

**4.1. ການດຸນດ່ຽງແຫຼ່ງທຶນ.**

ເພື່ອຮັບປະກັນຈັງຫວະການເຕີບໂຕຂອງ GDP ສະເລ່ຍ 12,5%ຕໍ່ປີ, ມີຄວາມຕ້ອງການລົງທຶນລວມທັງໝົດໃນ 5 ປີ ປະມານ 2.410 ຕື້ກີບ, ກວມເອົາປະມານ 51,2% ຂອງມູນຄ່າ GDP ຫຼື 1,9% ຂອງຄາດຄະເນການລົງທຶນລວມທົ່ວປະເທດ (127,000 ຕື້ກີບ). ໃນນີ້ ແບ່ງເປັນທຶນຂອງລັດ 293 ຕື້ກີບ ເທົ່າກັບ 12% (ລັດຖະ ບານກຳນົດ 8%), ລະດົມການຊ່ວຍເຫຼືອເພື່ອພັດທະນາທາງການ(ODA) ປະມານ 481 ຕື້ກີບ ເທົ່າກັບ 20% (ລັດ ຖະບານກຳນົດ 26%), ລະດົມການລົງທຶນໂດຍກົງຂອງພາກທຸລະກິດເອກະຊົນພາຍໃນ ແລະ ຕ່າງປະເທດ(FDI) ປະມານ 1.444 ຕື້ກີບ ເທົ່າກັບ 60% (ລັດຖະບານກຳນົດ 56%) ແລະ ລະດົມການລົງທຶນຈາກທະນາຄານ/ປະຊາຊົນເອງປະມານ 193 ຕື້ກີບ ເທົ່າກັບ 8% (ລັດຖະບານກຳນົດ10%). ຄວາມຕ້ອງການດັ່ງກ່າວນີ້, ຜ່ານການປະເມີນເບື້ອງຕົ້ນເຫັນວ່າມີແຫຼ່ງທຶນດຸ່ນດ່ຽງແລ້ວປະມານ 2.360 ຕື້ກີບ, ຍັງຂາດດຸນລວມ 50 ຕື້ກີບ.

**- ສະເພາະການດຸ່ນດ່ຽງແຫຼ່ງທຶນຂອງລັດ:**

ອີງໃສ່ງົບປະມານມີຈຳກັດ, ໜີ້ສິນຄຸມເຄືອຍັງຫຼວງຫຼາຍ, ດັ່ງນັ້ນ ຈຶ່ງໄດ້ຄົ້ນຄວ້າເພື່ອກຳນົດຈັດສັນແຫຼ່ງທຶນ ຂອງລັດ 293 ຕື້ກີບເພື່ອປະກອບ ໃຫ້ແຕ່ລະຂະແໜງການດັ່ງນີ້:

**1). ການຈັດສັນທຶນຕາມນະໂຍບາຍ ແລະ ບູລິມະສິດທຶນ:**

ທຶນສົມທົບກັບຕ່າງປະເທດ 15%, ກວມເອົາ 43,95 ຕື້ກີບ; ທຶນຊຳ ລະໜີ້ສິນໃນແຜນຕາມສັນຍາ 30%, ກວມເອົາ 87,90 ຕື້ກີບ; ທຶນໂຄງການສືບຕໍ່ 30% ກວມເອົາ 87,90 ຕື້ກີບ; ທຶນໂຄງການສະເໜີໃໝ່ 25% ກວມເອົາ 73,25 ຕື້ກີບ.

2). **ການຈັດສັນທຶນຕາມນະໂຍບາຍພັດທະນາຂະແໜງການ ແລະ ເຂດແຄ້ວນ:**

ຂົງເຂດເສດຖະກິດ 30% ມູນຄ່າ 87,90 ຕື້ກີບ ໃນນີ້: ກະສິກຳ-ປ່າ ໄມ້ 18% ກວມເອົາ 52,74 ຕື້ ກີບ; ຂົງເຂດວັດທະນະທຳ-ສັງຄົມ 32% ກວມເອົາ 93,76 ຕື້ກີບ ໃນນີ້: ສຶກສາ 12% ກວມເອົາ 35,16 ຕື້ກີບ, ສາ ທາ 8% ກວມເອົາ 24,44 ຕື້ກີບ; ໂຄງລ່າງທາງ+ເຄຫະສະຖານ 38% ກວມເອົາ 111,34 ຕື້ກີບ ໃນນີ້: ຂົວ-ທາງ 30% ກວມເອົາ 87,90 ຕື້ກີບ, ສຳນັກງານຕ່າງໆ 8% ກວມເອົາ 23,44 ຕື້ກີບ.

ສຳລັບການພັດທະນາຊົນນະບົດ ແມ່ນນອນຢູ່ນຳທຸກໆ ຂະແໜງການ. ສ່ວນເມືອງ ແມ່ນຂຶ້ນກັບການກຳນົດບູລິມະສິດຂອງຂະແໜງການ, ເມືອງໃດມີໂຄງການຈຸດສຸມດ້ານໃດກໍ່ຕ້ອງພັດທະນາດ້ານນັ້ນ.

**4.2. ການດຸນດ່ຽງແຮງງານ.**

ອີງຕາມການຄາດຄະເນປະຊາກອນຮອດປີ 2015 ຈະມີພົນລະເມືອງ 136.703 ຄົນ;ໃນນີ້ ເປັນກຳລັງ ແຮງງານຕົ້ນຕໍ (15-64 ປີ) ຈະມີປະມານ 75.000 ຄົນ. ແຕ່ເມື່ອທຽບໃສ່ຄວາມຕ້ອງການແຮງງານສະໜອງ ໃຫ້ແກ່ໂຄງການທີ່ລັດຖະບານ ກໍ່ຄືແຂວງອະນຸມັດຜ່ານມານັ້ນ ຍັງມີຄວາມສ່ຽງຕໍ່ການຂາດແຄນແຮງງານໃນ 5 ປີຕໍ່ໜ້າ ໂດຍສະເພາະແມ່ນແຮງງານທີ່ມີສີມື ແລະເຕັກນິກວິຊາການດ້ານຕ່າງໆ. ຄາດຄະເນແຫຼ່ງດຸນດ່ຽງຕົ້ນຕໍມາຈາກແຂວງຈຳປາສັກ, ສາລະວັນ, ສະຫວັນນະເຂດ ຫຼືມາຈາກ ສສ ຫວຽດນາມ ແລະ ສປ ຈີນ.

**4.3. ການດຸນດ່ຽງພັດທະນາຕາມບໍລິເວນພື້ນທີ່.** ໄດ້ຈັດແບ່ງພື້ນທີ່ການພັດທະນາ ເປັນ 3 ເຂດ ຄື: ເຂດທົ່ງພຽງ, ເຂດດິນຄ້ອຍຊັນ ແລະ ເຂດພູດອຍ. ຄຽງຄູ່ກັນນັ້ນຍັງໄດ້ກຳນົດເຂດພັດທະນາສະເພາະຕື່ມອີກຈຳນວນ ໜຶ່ງເຊັ່ນ: ເຂດເສດຖະກິດຊາຍແດນພູເກືອ (ຊາຍແດນລາວ-ຫວຽດນາມ- ກຳປູເຈຍ), ເຂດນິຄົມອຸດສາຫະກຳຫຼັກ 18 (ທາງ 18B), ເຂດອຸດສະຫະກຳຫຼັກ 9 (ທາງ 1I).

**- ເຂດທົ່ງພຽງ:** ກວມເອົາເມືອງ ໄຊເສດຖາ, ສາມັກຄີໄຊ ແລະ ສະໜາມໄຊ, ເຂດດັ່ງກ່າວຈະສຸມໃສ່ການກໍ່ສ້າງລະບົບຊົນລະປະທານ ແລະ ສູນບໍລິການເຕັກນິກ ເພື່ອສົ່ງເສີມການປູກເຂົ້າ, ໄມ້ໃຫ້ໝາກ, ພືດຊະນິດຕ່າງໆເຊັ່ນ: ພືດລົ້ມລຸກ, ຕະກຸນຖົ່ວ,...; ສົ່ງເສີມລ້ຽງສັດທຸກປະເພດ ແລະ ປາແບບເປັນຟາມ ສົມທົບກັບການລ້ຽງແບບຄອບຄົວ.

**- ເຂດດິນຄ້ອຍຊັນ:** ກວມເອົາສ່ວນໜຶ່ງຂອງເມືອງໄຊເສດຖາ, ເມືອງຊານໄຊ, ພູວົງ ແລະ ສ່ວນໜຶ່ງຂອງເມືອງສະໜາມໄຊ (ເຂດເຊື່ອມຕໍ່ກັບພູພຽງບໍລະເວນ ). ເຂດດັ່ງກ່າວສຸມໃສ່ສົ່ງເສີມການປູກໄມ້ອຸດສາຫະກໍາ-ໄມ້ ໃຫ້ໝາກ ແລະ ພືດອຸດສາຫະກໍາອື່ນໆເຊັ່ນ: ຢາງພາລາ; ໄມ້ຜະລິດເຈ້ຍ, ກາເຟ ແລະ ການລ້ຽງສັດໃຫຍ່.

**- ເຂດພູດອຍ:** ກວມເອົາເມືອງຊານໄຊ ແລະ ພູວົງ, ເຂດດັ່ງກ່າວ ສຸມໃສ່ສົ່ງເສີມການປູກພືດຜັກລະດູໜາວ, ກະເຟ, ຊາ , ... ເປັນເຂດຮັກສາແຫຼ່ງນໍ້າ ແລະ ປ່າໄມ້.

**- ເຂດເສດຖະກິດຊາຍແດນພູເກືອ (ຊາຍແດນລາວ-ຫວຽດນາມ- ກໍາປູເຈຍ):** ພັດທະນາໃຫ້ເປັນລະບົບຄົບຊຸດ ແລະ ເປັນປະຕູເຂົ້າອອກສໍາລັບ 4 ແຂວງພາກໃຕ້ຂອງລາວສູ່ຫວຽດນາມ. ຈະສ້າງເປັນຈຸດເຊື່ອມໂຍງການບໍລິການຜ່ານແລວເສດຖະກິດຕາເວັນອອກ-ຕາເວັນຕົກ ເຊື່ອມຕໍ່ກັບເຂດພາກກາງ, ພາກໃຕ້ ສສ ຫວຽດນາມ; ພາກຕາເວັນອອກສ່ຽງເໜືອຂອງ ຣາຊະອານາຈັກກໍາປູເຈຍ ແລະ ພາກຕາເວັນອອກສ່ຽງເໜືອຂອງໄທ.

**- ເຂດອຸດສະຫະກໍາຫຼັກ 18 (ທາງ 18B):** ແມ່ນຈະສ້າງເປັນພື້ນທີ່ຮອງຮັບ ການກໍ່ສ້າງໂຮງງານປຸງແຕ່ງຜະລິດຕະພັນກະສິກໍາ-ປ່າໄມ້ຕ່າງໆ ໂດຍສະເພາະແມ່ນຕິດພັນກັບໂຄງການປູກຢາງພາລາ ແລະ ປູກໄມ້ເຮັດເຈ້ຍຕາມບໍລິເວນພື້ນທີ່ເຊື່ອມຕໍ່ລະຫວ່າງ 3 ເມືອງ: (ຊານໄຊ, ພູວົງ, ໄຊເສດຖາ), ໂຄງການປູກມັນຕົ້ນ, ສາລີ ແລະ ພືດອື່ນໆ. ສ່ວນເຂດອຸດສະຫະກໍາຫຼັກ 9 ( ທາງ 1I) ແມ່ນຮັບໃຊ້ໂຮງງານປຸງແຕ່ງຂະໜາດກາງ-ນ້ອຍ ເປັນຕົ້ນ ໂຮງງານເຟີນີເຈີ ແລະ ການບໍລິການຈໍານວນໜຶ່ງ.

**5. ການພັດທະນາຂະແໜງການ ຕາມທິດຫັນເປັນອຸດສະຫະກໍາ- ທັນສະໄໝ.**

**5.1. ການພັດທະນາຂົງເຂດເສດຖະກິດ ແລະ ການບໍລິການ.**

**- ການພັດທະນາວຽກງານກະສິກໍາ ແລະ ປ່າໄມ້:** ໜ້າທີ່ຈຸດສຸມຕົ້ນ ຕໍແມ່ນສຸມໃສ່ສົ່ງເສີມການຜະລິດກະສິ ກໍາ-ປ່າໄມ້ໃຫ້ກາຍເປັນສິນຄ້າກາຍເປັນພື້ນຖານໃຫ້ແກ່ອຸດສາຫະກໍາປຸງແຕ່ງໂດຍຂຸດຄົ້ນນໍາໃຊ້ທ່າແຮງຂອງທົ່ງພຽງທີ 7 ຕາມທິດທີ່ລັດຖະບານໄດ້ກໍານົດໄວ້, ໃນນີ້ຖືເອົາການກໍ່ສ້າງຍົກລະດັບພື້ນຖານໂຄງລ່າງ ແລະ ການນໍາໃຊ້ເຕັກນິກວິທະຍາສາດການກະເສດ, ການຜະລິດທຸລະກິດ ຫຼືການລົງທຶນແບບເປັນຟາມ, ເປັນກຸ່ມ ແລະ ເປັນຈຸດສຸມ ເຂົ້າໃນວຽກງານດັ່ງກ່າວຢ່າງເປັນລະບົບຄົບຊຸດ ເປັນຕົ້ນ: ການສົ່ງເສີມຊົນລະກະເສດ, ເສີມຂະຫຍາຍ ແລະ ນໍາໃຊ້ສູນບໍລິການ ເຕັກນິກທີ່ມີຢູ່ໃຫ້ເຕັມປະສິດທິພາບ ແລະມີປະສິດທິຜົນ ໂດຍນໍາໃຊ້ການສາທິດ, ການ ທົດລອງ ແລະ ສົ່ງເສີມການນໍາໃຊ້ການຜະລິດຝຸ່ນຊີວະພາບ, ການຜະລິດກ້າກົບດຽວ, ພືດປອດສານພິດ, ການລ້ຽງສັດຕິດພັນກັບການຜະລິດອາຍແກັດຊີວະພາບຂອງຄົວເຮືອນ ແລະອື່ນໆ; ກໍ່ສ້າງຊົນລະປະທານຂະໜາດໃຫຍ່ ທີ່ເປັນທ່າແຮງສົມທົບກັບຂະໜາດກາງ ແລະ ນ້ອຍ ໃນບ່ອນທີ່ມີເງື່ອນໄຂບົນພື້ນຖານຄວາມສາມາດຄຸ້ມຄອງນໍາໃຊ້ຂອງບ້ານ ແລະ ກຸ່ມບ້ານ.

+ ຮອດປີ 2015 ສູ້ຊົນຜະລິດເຂົ້າໃຫ້ໄດ້ 118.000 ໂຕນ, ສະເລ່ຍ ຕໍ່ຫົວຄົນບັນລຸໄດ້ 863 ກິ ໂລຕໍ່ຄົນ ສາມາດກຸ້ມກິນ, ມີສ່ວນແຮໄວ້ ແລະ ຂາຍເປັນສິນຄ້າອອກຕ່າງແຂວງ ແລະ ຕ່າງປະເທດ. ໃນນີ້ ຈຸດສຸມຕົ້ນຕໍແມ່ນການຂະຫຍາຍເນື້ອທີ່ນາແຊງຈາກ 1.100 ຮຕ ເປັນ 6.000 ຮຕ ແລະ ສະມັດຕະພາບການຜະລິດ ສະເລ່ຍ 5,7 ໂຕນຕໍ່ເຮັກຕາ. ຫຼຸດຜ່ອນເນື້ອທີ່ໄຮ່ຄົງທີ່ ແລະ ໝູນວຽນລົງຈາກປະມານ 1.200 ຮຕ ໃຫ້ຍັງເຫຼືອ 246 ຮຕ, ລົບລ້າງເນື້ອທີ່ໄຮ່ເລື່ອນລອຍຢ່າງຂາດ ຕົວເຊີງ. ສູ້ຊົນສົ່ງເສີມການລ້ຽງສັດປະເພດຕ່າງໆ ເພີ່ມຂຶ້ນສະເລ່ຍຄື: ຄວາຍ 3%ຕໍ່ປີ, ງົວ 8%ຕໍ່ປີ, ໝູ 11%ຕໍ່ປີ, ແບ້ 10%ຕໍ່ປີ, ສັດປີກ 14%ຕໍ່ປີ ແລະການລ້ຽງປາ 17%ຕໍ່ປີ; ການບໍລິໂພກ ຊີ້ນ-ປາ ເຂດຕົວເມືອງໃຫ້ໄດ້ 40 ກິໂລຕໍ່ຄົນຕໍ່ປີ ແລະ ເຂດຊົນນະບົດໃຫ້ ໄດ້ 35 ກິໂລຕໍ່ຄົນຕໍ່ປີ. ເພີ່ມເນື້ອທີ່ປ່າສີຂຽວໃຫ້ໄດ້ 20% ແລະ ຮັກສາອັດຕາການປົກຫຸ້ມຂອງປ່າໃຫ້ໄດ້ 70% ຂອງພື້ນທີ່ທົ່ວແຂວງ.

+ ຄາດຄະເນບັນດາສິນຄ້າກະສິກໍາທີ່ຈະອອກສູ່ຕະຫຼາດໃນຕໍ່ໜ້າ ມີ: ນໍ້າຢາງພາລາດິບ, ສາລີ, ມັນຕົ້ນ, ກາເຟ, ໝາກປາມ, ເປືອກບົງ ແລະ ພືດອາຍຸສັ້ນ-ອາຍຸກາງຈໍານວນໜຶ່ງ.

+ ເພື່ອຮັບປະກັນຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນດັ່ງກ່າວ ນັ້ນຈະໄດ້ສຸມໃສ່ກໍ່ສ້າງໂຄງລ່າງດ້ວຍ ທຶນຂອງລັດ, ທຶນຊ່ວຍເຫຼືອ ແລະ ສົ່ງ ເສີມພາກເອກະຊົນຕາມກົນໄກຊົນລະກະເສດຈໍານວນໜຶ່ງ, ຄົ້ນຄວ້າ ແລະ ປັບປຸງການຮ່ວມທຸລະກິດຕາມກົນໄກ 2+3, ທຸລະກິດຕາມສັນຍາ ແລະ ອື່ນໆໃນນີ້ໂຄງການຈຸດສຸມທີ່ຈະສືບຕໍ່ກໍ່ສ້າງ: ໂຄງການຊົນລະປະທານເຊປຽນ

ໃຫ້ສຳເລັດທັງໄລຍະ 1 ແລະ 2, ຊົນລະປະທານນ້ຳງອນ, ລະດົມທຶນກໍ່ສ້າງ ຊົນລະປະທານເຊນ້ຳນ້ອຍ, ຫ້ວຍເປາະ ແລະ ແຫ່ງອື່ນໆ. ຊຸກຍູ້ ແລະ ສົ່ງເສີມໂຄງການປູກໄມ້ ແລະ ພືດອຸດສະຫະກຳໃຫ້ບັນລຸຕາມເນື້ອ ທີ່ທີ່ໄດ້ຮັບຮອງເອົາແລ້ວນັ້ນ. ສືບຕໍ່ຈັດຕັ້ງປະຕິບັດບັນດາໂຄງການຮ່ວມມືກັບສາກົນໃນ ການຜະລິດເປັນສິນຄ້າ, ການຈັດສັນປ່າຜະລິດ, ການຄຸ້ມ ຄອງປ່າສະຫງວນ ແລະ ໂຄງການອື່ນໆ ໃຫ້ມີປະສິດທິ ຜົນສູງ.

**- ການພັດທະນາດ້ານພະລັງງານໄຟຟ້າ-ບໍ່ແຮ່:** ໜ້າທີ່ຈຸດສຸມແມ່ນຊຸກຍູ້ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ການລົງທຶນພັດທະນາ ໂຄງການຕ່າງໆ ທີ່ໄດ້ຮັບອະນຸຍາດຜ່ານມານັ້ນໃຫ້ໄດ້ລົງມືຈັດຕັ້ງປະຕິບັດ. ສຳລັບວຽກງານໄຟຟ້າ ແມ່ນຮັບປະກັນການສະໜອງກະແສໄຟຟ້າໃຫ້ແກ່ ລະບົບຊົນລະປະທານ, ໂຮງຈັກໂຮງງານ ຕ່າງໆ ແລະການບໍລິການສັງຄົມ; ສູ້ຊົນໃຫ້ປະຊາຊົນມີໄຟຟ້າໃຊ້ກວມເອົາ 90% ຂອງຄົວເຮືອນທົ່ວແຂວງ ໃນປີ 2015, ຊຸກຍູ້ການລົງມືກໍ່ສ້າງເຂື່ອນເຊກະໝານ 1, ເຊນ້ຳນ້ອຍ 1, ເຊປຽນ-ເຊນ້ຳນ້ອຍ, ເຊປຽນ-ຫ້ວຍຊອຍ, ນ້ຳກົງ 1 ແລະ ອື່ນໆ. ທົດລອງນຳໃຊ້ພະລັງງານທົດແທນໃນເຂດຊົນນະບົດຫ່າງໄກສອກຫຼີກ. ສ່ວນດ້ານບໍ່ແຮ່ສູ້ຊົນຊຸກຍູ້ໃຫ້ເກີດມີໂຄງການຂຸດຄົ້ນບໍ່ແຮ່ຂະໜາດກາງ ຫຼື ໃຫຍ່ເປັນຕົ້ນ: ບົກຊິດ, ຄຳ ແລະ ທອງແດງ; ສະໜອງແຮ່ຊາຍໃຫ້ແກ່ການກໍ່ສ້າງຢ່າງພຽງພໍ. ສ້າງຂະແໜງດັ່ງກ່າວ ໃຫ້ກາຍເປັນພື້ນຖານໃໝ່ໃນໂຄງປະກອບເສດຖະກິດ, ສ້າງວຽກເຮັດງານທຳທີ່ໝັ້ນຄົງ ແລະ ລາຍຮັບເຂົ້າງົບປະມານ.

**- ການພັດທະນາດ້ານອຸດສາຫະກຳ - ການຄ້າ ແລະ ການບໍລິການ ຜ່ານ:** ສູ້ຊົນສ້າງໃຫ້ເກີດການພັດທະນາເຂດອຸດສາຫະກຳຫຼັກ 18, ພັດທະນາເຂດບໍລິເວນດ່ານສາກົນພູເກືອ ໃຫ້ກາຍເປັນຕົວເມືອງນ້ອຍຕິດພັນກັບການບໍລິການຜ່ານ ແລະ ເຂດການຄ້າເສລີຊາຍແດນ. ສືບຕໍ່ປັບປຸງ ແລະ ດັດສົມໂຮງງານປຸງແຕ່ງໄມ້ໃຫ້ສຳເລັດ, ລົງທຶນໃໝ່ຈຳນວນໜຶ່ງ. ສ້າງຄັງເຂົ້າແຮຂອງແຂວງເພື່ອດຸ່ນດ່ຽງຕະຫຼາດ ແລະ ແຊກແຊງລາຄາໃນຍາມຈຳເປັນ. ຕັ້ງໜ້າຄຸ້ມຄອງຕະຫຼາດ ແລະ ລາຄາໃຫ້ໄດ້ດີ ໂດຍສະເພາະສິນຄ້າອຸປະໂພກ-ບໍລິໂພກປະຈຳວັນ ແລະ ບັນດາສິນຄ້າຍຸດທະສາດ. ເອົາໃຈໃສ່ສົ່ງເສີມການສົ່ງອອກ ແລະ ຄຸ້ມຄອງການນຳເຂົ້າ, ສິນຄ້າຜ່ານໃຫ້ວ່ອງໄວ. ຫັນປ່ຽນໂຄງປະກອບການສົ່ງອອກຈາກປະເພດວັດຖຸດິບມາເປັນສິນຄ້າເຄິ່ງສຳເລັດຮູບ ແລະ ສຳເລັດຮູບ. ປັບປຸງບັນດາຫົວໜ່ວຍທຸລະກິດພາຍໃນແຂວງໃຫ້ເຂັ້ມແຂງສາມາດຮ່ວມທຸລະກິດກັບຕ່າງປະເທດ, ຄົ້ນຄວ້າ ແລະ ສ້າງຕັ້ງສະພາອຸດສາຫະກຳ ແລະ ການຄ້າຂອງແຂວງ ແລະ ສະມາຄົມທຸລະກິດດ້ານຕ່າງໆ, ຈັດຕັ້ງຕະຫຼາດນັດ ແລະ ເຂົ້າຮ່ວມງານວາງສະແດງ, ຈຳໜ່າຍສິນຄ້າທ້ອງຖິ່ນທັງພາຍໃນ, ຕ່າງແຂວງ ແລະ ຕ່າງປະເທດ; ກະກຽມຈັດງານຕະຫຼາດນັດ-ວາງສະແດງສິນຄ້າ ໃນກອງປະຊຸມຮອບວຽນລາວ-ຫວຽດນາມ-ກຳປູເຈຍ ທີ່ແຂວງອັດຕະປື ເປັນເຈົ້າພາບ.

**- ການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ:** ສູ້ຊົນເຮັດໃຫ້ນັກທ່ອງທ່ຽວເຂົ້າມາທ່ຽວແຂວງອັດຕະປື ຮອດປີ 2015 ໃຫ້ໄດ້ 59.437 ຄົນ, ເພີ່ມຂຶ້ນສະເລ່ຍ 10%ຕໍ່ປີ; ຮອດປີ 2015 ສູ້ຊົນໃຫ້ມີໂຮງແຮມທັນສະໄໝລະດັບ 3 ດາວຂຶ້ນໄປ. ອຳນວຍຄວາມສະດວກໃນການສ້າງຕັ້ງບໍລິສັດນຳທ່ຽວໃຫ້ໄດ້ 3 ບໍລິສັດ; ປັບປຸງໜ່ວຍງານບໍລິການດ້ານການທ່ອງທ່ຽວໃຫ້ໄດ້ເມືອງລະ 1 ແຫ່ງ; ຂຸດຄົ້ນ, ພັດທະນາ ແລະ ຂະຫຍາຍແຫຼ່ງທ່ອງທ່ຽວທາງດ້ານທຳມະຊາດ 4 ແຫ່ງ, ວັດທະນະທຳ 2 ແຫ່ງ ແລະ ປະຫວັດສາດໃຫ້ໄດ້ 1 ແຫ່ງ. ໂຄສະນາຜ່ານເວັບໄຊ ແລະ ສົ່ງເສີມການລົງທຶນພັດທະນາແຫຼ່ງທ່ອງທ່ຽວທີ່ມີຈຸດເດັ່ນຈຳນວນໜຶ່ງ ເຊັ່ນ: ປັບປຸງບັນດາໂຮງແຮມ ແລະ ກໍ່ສ້າງໂຮງແຮມໃໝ່ລະດັບ 3 ດາວຈຳນວນໜຶ່ງ, ພັດທະນາແຫຼ່ງທ່ອງທ່ຽວຕາດຫົວຄົນ, ໜອງຟ້າ ແລະ ອື່ນໆ.

**- ການພັດທະນາວຽກງານໂຍທາທິການ ແລະ ຂົນສົ່ງ:** ສຸມໃສ່ທະ ລຸເສັ້ນທາງໃຫ້ເຂົ້າເຖິງທຸກບ້ານ ແລະ ກຸ່ມບ້ານ; ລົງມືປູຢາງໃຈກາງ 4 ເມືອງ (ໄຊເສດຖາ, ສະໜາມໄຊ, ຊານໄຊ ແລະ ພູວົງ); ລົງມືພັດທະນາເສັ້ນທາງຕົວເມືອງເທດສະບານແຂວງ (ທາງ 4 ເລນ) ແລະ ບັນດາໂຄງການຊ່ວຍເຫຼືອຈາກສາກົນ ເຊັ່ນ: ທາງຊົນນະບົດ ADB 10, KFW, ຂົວເຊກະໝານ 2 ແລະ ອື່ນໆໃຫ້ສຳເລັດ. ຊຸກຍູ້ໃຫ້ໄດ້ລົງມືກໍ່ສ້າງທາງ 1J, ທາງ 18 A ແລະ ທາງອື່ນໆ, ໂດຍສະເພາະແມ່ນຕ້ອງໄດ້ຍົກລະດັບ ແລະ ກໍ່ສ້າງຂົວ-ທາງ ແຕ່ແຂວງໄປຫາສະໜາມໄຊ; ສຳຫຼວດອອກແບບ ແລະ ກໍ່ສ້າງສະໜາມບິນ, ສະຖານີລົດໂດຍສານແຫ່ງໃໝ່ທີ່ສາມາດຮອງຮັບການຂົນສົ່ງສິນຄ້າ, ໂດຍສານ ແລະ ການທ່ອງທ່ຽວ ເປັນຕົ້ນ ແມ່ນໃນກອບເຂດ 3 ຫຼ່ຽມພັດທະນາ.

ປັບປຸງ ແລະ ພັດທະນາຕົວເມືອງເທດສະບານແຂວງໃຫ້ມີສີສັນໃໝ່, ສົ່ງເສີມໃຫ້ພາກສ່ວນເອກະຊົນປະກອບສ່ວນພັດທະນາເມືອງໄຊເສດຖາ ແລະ ລົງມືພັດທະນາເມືອງພູວົງໃໝ່. ຄຸ້ມຄອງຜັງເມືອງ ແລະ ການປຸກສ້າງໃຫ້ໄປຕາມລະບຽບການ, ອອກແບບຕຶກອາຄານ, ຫ້ອງການ, ສູນການຄ້າ ກຳນົດຂອບເຂດຂອງອາຄານຢູ່ເທດສະບານແຂວງ ເພື່ອເປັນບ່ອນອີງໃນການພັດ

ທະນາໄລຍະຍາວ ແລະ ສົ່ງເສີມການລົງທຶນ. ຂະຫຍາຍລະບົບນໍ້າປະ ປາໃຫ້ທົ່ວເຖິງບັນດາໃຈກາງເມືອງ ແລະ ກຸ່ມບ້ານຈຸດສຸມຈໍານວນໜຶ່ງ.

**- ໄປສະນີ, ໂທລະມະນາຄົມ ແລະ ອິນເຕີເນັດ:** ຂະຫຍາຍຕາໜ່າງ ການບໍລິການ ແລະ ຈ່າມໄປສະນີ ໃຫ້ທົ່ວເຖິງທຸກເມືອງ ແລະ ເຂດສໍາຄັນ ເປັນຕົ້ນດ່ານສາກົນພູເກືອ, ດ່ານປາກເຊປຽນ. ປັບປຸງຄື້ນສັ່ງສັນຍານໂທລະຄົມໃຫ້ກວມເອົາ 100% ຂອງພື້ນທີ່ທົ່ວແຂວງ, ເຂດອຸດສາຫະກໍາເປັນຕົ້ນເຂດສວນຢາງພາລາ, ສວນໄມ້, ເຂດກໍ່ສ້າງເຂື່ອນໄຟຟ້າ, ໂຮງງານອາລູມີນຽມ, ເຂດຂຸດຄົ້ນບໍ່ແຮ່ ແລະ ອື່ນໆ. ເພີ່ມຮູບແບບການບໍລິການໃຫ້ມີຫຼາຍສີສັນ ແລະ ທາງເລືອກ, ເພີ່ມປ່ອງບໍລິການໃຫ້ຫຼາຍຂຶ້ນ ແລະ ອັດຕາສ່ວນຜູ້ຊົມໃຊ້, ອໍານວຍຄວາມສະດວກໃຫ້ແກ່ການບໍລິການອິນເຕີແນັດກ້າວໄປສູ່ການຈັດກອງປະຊຸມທາງໄກ.

**- ວຽກງານການເງິນ:** ສູ້ຊົນເກັບລາຍຮັບງົບປະມານໃຫ້ກຸ້ມລາຍຈ່າຍເງິນເດືອນ, ບໍລິຫານ ແລະລາຍຈ່າຍລົງທຶນຈໍານວນໜຶ່ງແກ້ໄຂໜີ້ສິນຄຸມເຄືອໃຫ້ໄດ້ເປັນສ່ວນໃຫຍ່. ປະຕິບັດການລົງທຶນຕາມລະບຽບກົດໝາຍຢ່າງເຄັ່ງຄັດ, ສະກັດກັ້ນປະກົດການຫຍໍ້ທໍ້ໃນຂົງເຂດການເງິນ, ແຜນການ ແລະ ການລົງທຶນ, ພະຍາຍາມດ້ວຍຫຼາຍວິທີອັນເໝາະສົມເພື່ອນໍາພາ, ຈັດຕັ້ງ ແລະ ສ້າງເງື່ອນໄຂໃຫ້ຊາວກະສິກອນ, ຜູ້ປະກອບການຂະໜາດນ້ອຍ-ກາງເຂົ້າເຖິງແຫຼ່ງເງິນກູ້ດອກເບ້ຍຕໍ່າ ແລະ ແຫຼ່ງທຶນອື່ນໆ ເພື່ອການຜະລິດສິນຄ້າ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ.

**- ວຽກງານທະນາຄານ:** ສູ້ຊົນປຸກລະດົມແຫຼ່ງທຶນໃຫ້ເພີ່ມຂຶ້ນ, ຮັບປະກັນໃຫ້ແກ່ການປ່ອຍສິນເຊື່ອເຂົ້າໃນການຜະລິດກະສິກໍາທຸລະກິດການຄ້າ-ການບໍລິການ ແລະ ອື່ນໆ ໃຫ້ມີປະສິດທິຜົນ; ຄຸ້ມຄອງລາຍຈ່າຍ ເພື່ອເຮັດໃຫ້ລາຍຮັບທຸລະກິດເພີ່ມຂຶ້ນ ຕິດພັນກັບການຄຸ້ມຄອງເງິນຕາຕ່າງປະເທດແລະຂະຫຍາຍການບໍລິການດ້ວຍຕູ້ ATM ພາຍໃນແຂວງໃຫ້ເພີ່ມຂຶ້ນ.

**- ການຈັດສັນ, ຄຸ້ມຄອງນໍາໃຊ້ ແລະ ພັດທະນາທີ່ດິນ:** ວຽກຕົ້ນຕໍແມ່ນສຸມໃສ່ສ້າງຖານຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທໍາມະຊາດ, ຮັບຮອງ ແລະ ປະກາດໃຊ້ແຜນທີ່ດິນມະຫາພາກຂັ້ນແຂວງ, ຄຸ້ມຄອງການນໍາໃຊ້ທີ່ດິນຊັບພະຍາກອນ ແລະ ທໍາມະຊາດຕາມເນື້ອທີ່ໄດ້ກໍານົດ ໄວ້ ຄື: ທີ່ດິນອະນຸລັກ 62,77% ແລະ ທີ່ດິນນໍາໃຊ້ 37,23% ໃນນີ້ຕົ້ນຕໍ ແມ່ນຄົ້ນຄວ້ານໍາໃຊ້ທີ່ດິນແຕ່ລະປະເພດໃຫ້ກາຍເປັນທຶນຕາມນະໂຍບາຍ ຂອງລັດຖະບານ.

ສືບຕໍ່ສໍາຫຼວດກວດກາຈັດສັນທີ່ດິນ ແລະ ອອກໃບຕາດິນ, ສັນຍາສໍາປະທານດິນ; ສ້າງແຜນທີ່ນໍາໃຊ້ທີ່ດິນຢູ່ຂັ້ນບ້ານ ແລະ ກຸ່ມບ້ານໃນທົ່ວແຂວງ ເພື່ອສ້າງເປັນຖານຂໍ້ມູນໃນການຄຸ້ມຄອງ-ບໍລິຫານທີ່ດິນ, ກວດກາ ແລະ ແກ້ໄຂຂໍ້ຂັດແຍ່ງທີ່ດິນໃຫ້ທັນເວລາ. ຮັບປະກັນການເກັບລາຍຮັບຈາກທີ່ດິນໃຫ້ໝັ້ນຄົງ ແລະ ເພີ່ມຂຶ້ນໃນແຕ່ລະ ປີ.

**5.2. ການພັດທະນາຂົງເຂດສັງຄົມ-ວັດທະນະທໍາ, ວິທະຍາສາດ ແລະ ເຕັກໂນໂລຊີ**

**- ການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດ:** ຕັ້ງໜ້າ ປຸກລະດົມໃນທົ່ວສັງຄົມປະກອບສ່ວນໃນວຽກງານພັດທະນາການສຶກສາ, ຮັບປະກັນການປະຕິບັດແຜນງານແຫ່ງຊາດດ້ານການສຶກສາ ເພື່ອທຸກຄົນໃຫ້ປະກົດຜົນເປັນຈິງ. ສ້າງເງື່ອນໄຂອໍານວຍຄວາມສະດວກ ໃຫ້ເດັກຍິງ ແລະ ຊົນເຜົ່າ ໄດ້ເຂົ້າໂຮງຮຽນຢ່າງເຕັມເມັດເຕັມໜ່ວຍ ພ້ອມທັງຂະຫຍາຍໂອກາດໃຫ້ຄູ-ອາຈານ ໄປຍົກລະດັບ ແລະ ຄຸນນະພາບການສິດສອນໃຫ້ມີຄຸນນະວຸດທິແຕ່ຊັ້ນສູງຂຶ້ນໄປ.

+ ສູ້ຊົນເຮັດໃຫ້ອັດຕາເຂົ້າຮຽນສຸດທິຊັ້ນປະຖົມເພີ່ມຂຶ້ນເປັນ 95- 98%, ຂະຫຍາຍໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານໃຫ້ສາມາດຮັບນັກ ຮຽນເພີ່ມໃຫ້ໄດ້ຢ່າງໜ້ອຍ 25% ຂຶ້ນໄປໃນປີ 2015, ສ້າງເງື່ອນໄຂ ເພື່ອ ເຮັດໃຫ້ອັດຕາຄ້າງຫ້ອງ ແລະ ອັດຕາການປະລະການຮຽນຂອງນັກຮຽນທຸກຊັ້ນສະເລ່ຍບໍ່ເກີນ 3%, ເພີ່ມອັດຕາເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນໃຫ້ໄດ້ 56,9%, ອັດຕາເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມຕອນປາຍໃຫ້ໄດ້ 36,5%, ສູ້ຊົນລຶບລ້າງຄວາມບໍ່ຮູ້ໜັງສືໃນກຸ່ມເປົ້າໝາຍອາຍຸ 15-24 ປີໃຫ້ໄດ້ 98,1%, ອັດຕາການຮູ້ໜັງສືຂອງປະຊາຊົນອາຍຸ 15 ປີ ຂຶ້ນໄປໃຫ້ໄດ້ 89%. ລຶບລ້າງຄວາມບໍ່ຮູ້ໜັງສືຂອງປະຊາຊົນອາຍຸ 15-40 ປີ ໃຫ້ໄດ້ຢ່າງຊິ້ນເຊີງ. ສ້າງໂຮງຮຽນຕົວແບບສີຂຽວຢູ່ແຕ່ລະເມືອງ 1 ແຫ່ງ ແລະ ໂຮງຮຽນໄດ້ມາດຖານຄຸນນະພາບຢ່າງໜ້ອຍ 3 ແຫ່ງຂອງແຂວງ. ສູ້ຊົນໃຫ້ມີນັກຮຽນເກັ່ງແຕ່ລະຊັ້ນລະດັບປະເທດໃຫ້ໄດ້ຢ່າງໜ້ອຍປີລະ 5 ຄົນ, ຄູດີເດັ່ນ, ຄູຊໍານານງານ ແລະ ຄູຊ່ຽວຊານເພີ່ມຂຶ້ນແຕ່ລະປີ. ສູ້ຊົນປະກາດບ້ານຈົບປະຖົມໃຫ້ໄດ້ 80% ຂອງ ຈໍານວນບ້ານ. ອໍານວຍຄວາມສະດວກໃຫ້ແກ່ພາກເອກະຊົນສ້າງຕັ້ງໂຮງຮຽນສາມັນ ແລະ ອາຊີວະສຶກສາເພີ່ມຂຶ້ນ, ເພື່ອມີທາງເລືອກໃຫ້ແກ່ສັງຄົມ ແລະ ເປັນການຫຼຸດຜ່ອນການແບກຫາບຂອງລັດ. ໂຄງການສໍາຄັນຕົ້ນຕໍຈໍານວນໜຶ່ງທີ່ຈະຕ້ອງສຸມໃສ່ຄື: ໂຄງການກໍ່ສ້າງໂຮງຮຽນວິຊາຊີບໃຫ້ເປັນລະບົບຖາວອນ, ໂຮງຮຽນຊົນເຜົ່າ ແລະ ໂຮງຮຽນມັດທະຍົມຕົ້ນຢູ່ເຂດຈຸດສຸມກຸ່ມ ບ້ານຕິດພັນກັບການສຶກສານອກໂຮງຮຽນ.

- **ວຽກສາທາລະນະສຸກ:** ຕອບສະໜອງບຸກຄະລາກອນດ້ານການ ແພດ, ສະໜອງຢາປິ່ນປົວສຸຂະພາບ, ອຸປະກອນການແພດໃຫ້ພຽງພໍ; ຍົກລະດັບເຕັກນິກວິຊາການແຕ່ລະໜ່ວຍງານໃຫ້ເຂັ້ມແຂງ; ຂະຫຍາຍວຽກງານ ສຸຂະສຶກສາໃຫ້ປົກຄຸມ 98% ຂອງພື້ນທີ່ທົ່ວແຂວງ. ຫຼຸດຜ່ອນອັດຕາການຕາຍຂອງແມ່ໃຫ້ຍັງເຫຼືອ 260 ຕໍ່ເດັກເກີດມີຊີວິດ 100.000 ຄົນ, ຫຼຸດອັດຕາການຕາຍຂອງເດັກນ້ອຍລຸ່ມ 1 ປີ ໃຫ້ຍັງເຫຼືອ 45 ຕໍ່ເດັກເກີດມີຊີວິດ 1.000 ຄົນ, ຫຼຸດອັດຕາການຕາຍຂອງເດັກນ້ອຍລຸ່ມ 5 ປີ ໃຫ້ຍັງເຫຼືອ 55 ຕໍ່ເດັກເກີດມີຊີວິດ 1.000 ຄົນ, ອັດຕາສັກຢາຂອງເດັກອາຍຸຕໍ່າກວ່າ 1 ປີ ໃຫ້ ໄດ້ 85%, ອັດຕາຊົມໃຊ້ການຄຸມກໍາເນີດຂອງກຸ່ມເປົ້າໝາຍ ໃຫ້ໄດ້ 55%, ອັດຕາການເກີດໂດຍມີແພດຊ່ວຍ 30%, ອັດຕາການຊົມໃຊ້ນໍ້າສະອາດໃຫ້ໄດ້ 80%, ອັດຕາການຊົມໃຊ້ວິດຖ່າຍໃຫ້ໄດ້ 50 %, ອັດຕາການຕາຍຍ້ອນໄຂ້ຍຸງບໍ່ໃຫ້ເກີນ 0,2 ຄົນຕໍ່ປະຊາກອນ 100.000 ຄົນ, ອັດຕາການ ຕາຍຍ້ອນວັນນະໂລກໃຫ້ຫຼຸດລົງຕໍ່າກວ່າ 5% ຂອງຜູ້ເປັນພະຍາດ, ອາຍຸຍືນສະເລ່ຍຂອງປະຊາກອນ 61 ປີ. ເອົາໃຈໃສ່ໃນການຈໍາກັດຄວບຄຸມພະ ຍາດທີ່ເກີດຂຶ້ນຕາມລະດູການ, ເຝົ້າລະວັງໂລກລະບາດ ແລະ ແກ້ໄຂຢ່າງທັນການ, ມີປະສິດທິຜົນ. ອີງການກາແດງຕ້ອງສູ້ຊົນລະດົມການບໍລິຈາກເລືອດ ເພື່ອມີເລືອດແຮສຸກເສີນທັນເວລາໃຫ້ໄດ້ປີ ລະ 300 ຖົງຂຶ້ນໄປທັງອອກແຮງລະດົມທຶນນໍາສັງຄົມ ເພື່ອຊ່ວຍເຫຼືອຜູ້ທຸກຍາກ-ດ້ອຍໂອກາດ. ໂຄງການບູລິມະສິດຕົ້ນຕໍແມ່ນສ້າງໂຮງໝໍໃໝ່ 200 ຕຽງໃຫ້ສໍາເລັດພ້ອມ ທັງປະກອບການແພດ, ການຢາ ແລະ ພະນັກງານແພດໝໍໃຫ້ຄົບຊຸດ; ປັບປຸງ ແລະ ຄຸ້ມຄອງນໍາໃຊ້ບັນດາສຸກສາລາ, ຕູ້ຢາ, ໝໍຕໍາແຍ ແລະ ອສບ ໃຫ້ເຕັມປະສິດທິພາບ.

- **ວຽກງານຖະແຫຼງຂ່າວ-ວັດທະນະທໍາ:** ສູ້ຊົນເຮັດໃຫ້ວຽກງານສື່ມວນຊົນມີຄຸນນະພາບ ແລະ ທັນສະໄໝ, ສາມາດກະຈ່າຍສຽງ ແລະ ພາບໄດ້ກວມເອົາ 90-95% ຂອງພື້ນທີ່ທົ່ວແຂວງ. ຂະຫຍາຍຕາໜ່າງຖະແຫຼງຂ່າວສື່ມວນຊົນ, ວັດທະນະທໍາລົງສູ່ປະຊາຊົນ ແລະ ຊົນນະບົດໃຫ້ກວ້າງຂວາງ, ເປັນຕົ້ນຢູ່ເທດສະບານແຂວງ, ເມືອງ, ບ້ານໃຫຍ່ ແລະ ກຸ່ມບ້ານໃຫ້ມີລະບົບໂທລະໂຄ່ງ, ຊຸກຍູ້ໃຫ້ພະແນການອ້ອມຂ້າງແຂວງ ແລະ ບັນດາເມືອງໄດ້ອ່ານໜັງສືພິມ, ວາລະສານ, ໄດ້ຟັງວິທະຍຸ, ເບິ່ງໂທລະພາບແຫ່ງຊາດແລະຂອງແຂວງ; ສ້າງໃຫ້ມີຕາໜ່າງຂ່າວຢູ່ພະແນກການຕົ້ນຕໍຈໍານວນໜຶ່ງ. ສູ້ຊົນສ້າງໃຫ້ໄດ້ຄອບຄົວວັດທະນະທໍາ 13.000 ຄອບຄົວ, ບ້ານວັດທະນະທໍາຫຼາຍກວ່າ 80 ບ້ານທົ່ວແຂວງ. ສ້າງ ແລະ ຟື້ນຟູຮ່ອງຮອຍປະຫວັດສາດ, ວັດທະນະທໍາ, ຮີດຄອງປະເພນີອັນດີງາມ ເຊັ່ນ: ທາດພະເຈົ້າ ໄຊເສດຖາ, ວັດຫຼວງ, ວັດສະແຄະ, ເຂດເສັ້ນທາງປົດປ່ອຍອິນດູຈີນ, ສືບຕໍ່ພັດທະນາເຂດທີ່ໝັ້ນລາວໃຕ້ ແລະ ອື່ນໆ. ສືບຕໍ່ຄຸ້ມຄອງ, ອະນຸລັກຮັກສາ ແລະ ເສີມຂະຫຍາຍວັດທະນະທໍາອັນດີງາມ ຂອງທ້ອງຖິ່ນ ເປັນຕົ້ນ: ຄົ້ນຄວ້າຄືນ ຈັ່ງຫວະຂັບລໍາອັດຕະປື, ເຄື່ອງດົນຕີພື້ນເມືອງບັນດາເຜົ່າ, ຈັດຕັ້ງງານມະໂຫລານສິນລະປະພື້ນເມືອງໃນທົ່ວແຂວງໃຫ້ໄດ້ປີລະ 1 ຄັ້ງ. ສືບຕໍ່ປັບປຸງຫ້ອງອັດສຽງ ແລະ ລະບົບກະຈ່າຍພາບຂອງສະຖານີໂທລະພາບແຂວງ, ປັບປຸງ ແລະ ປະກອບອຸປະກອນເຕັກນິກ-ພາຫະນະສື່ມວນຊົນທີ່ຈໍາເປັນໃຫ້ບັນດາເມືອງ, ປັບປຸງການບໍລິການຂອງໂທລະພາບໃຊ້ສາຍ ແລະ ອື່ນໆ.

- **ວຽກງານແຮງງານ ແລະ ສະຫວັດດີການສັງຄົມ:** ສ້າງສູນຝຶກສີມືແຮງງານ 1 ແຫ່ງ, ເພື່ອຈັດຝຶກອົບຮົມວິຊາຊີບສ້າງຄວາມສາມາດ ແລະ ມາດຖານສີມືແຮງງານໃຫ້ຊາວໜຸ່ມພາຍໃນແຂວງ ຊຸກຍູ້ໃຫ້ຜູ້ໃຊ້ແຮງງານ ແລະ ໂຄງການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ຝຶກສີມືແຮງງານໃຫ້ກໍາມະກອນ ແລະ ຜູ້ອອກແຮງງານທີ່ເປັນຄົນລາວ, ເກັບກໍາສະຖິຕິແຮງງານ, ຂຶ້ນທະບຽນຄວາມຕ້ອງການຝຶກວິຊາຊີບຕ່າງໆ, ຂຶ້ນທະບຽນແຮງງານຫວ່າງງານ, ຈັດຫາວຽກເຮັດງານທໍາໃຫ້ຜູ້ຢາກເຮັດວຽກ, ຈັດສົ່ງແຮງງານພາຍໃນແຂວງໄປເຮັດວຽກຢູ່ຕ່າງປະເທດຕາມເງື່ອນໄຂຕົວຈິງ ພ້ອມທັງ ເກັບກໍາຂໍ້ມູນແຮງງານລາວອອກໄປເຮັດວຽກຢູ່ຕ່າງປະເທດ, ປັບປຸງຄ່າແຮງງານຂອງກໍາມະກອນໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

- **ດ້ານສະຫວັດດີການສັງຄົມ:** ສືບຕໍ່ຄົ້ນຄວ້ານະໂຍບາຍ ຕໍ່ພະນັກ ງານປະຕິວັດອາວຸໂສບໍານານ, ກຽມພ້ອມຊ່ວຍເຫຼືອສຸກເສີນຕໍ່ຜູ້ກະທົບຈາກໄພພິບັດທາງທໍາມະຊາດ; ສືບຕໍ່ໂຄສະນາຕໍ່ຜົນຮ້າຍຂອງລະເບີດທີ່ບໍ່ທັນແຕກ ແລະ ເກັບກູ້ອອກຈາກເນື້ອທີ່ທໍາການຜະລິດຂອງປະຊາຊົນ ໂດຍສະເພາະຢູ່ເຂດທີ່ມີຄວາມສ່ຽງ ເຊັ່ນ: ເມືອງໄຊເສດຖາ, ພູວົງ ແລະ ຊານໄຊ ເປັນເຂດບູລິມະສິດທີ 1, ສ່ວນເມືອງສະໜາມໄຊ, ສາມັກຄີໄຊ ແມ່ນເປັນ ບູລິມະສິດທີ 2.

- **ວຽກງານສົ່ງເສີມຄວາມກ້າວໜ້າຂອງຜູ້ຍິງ ແລະ ການປົກປ້ອງ ເດັກ**: ເພີ່ມທະວີວຽກງານສຶກສາອົບຮົມການເມືອງແນວຄິດ, ເຜີຍແຜ່ນະໂຍບາຍການສົ່ງເສີມ ແລະ ປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍຕິດພັນກັບການສ້າງຂະບວນການ 3 ດີ, ເຕົ້າໂຮມຄວາມສາມັກຄີພາຍໃນສະມາຊິກສະຫະພັນແມ່ຍິງ ພ້ອມທັງຂະຫຍາຍອອກຢ່າງກວ້າງຂວາງ ໂດຍສະເພາະເຂດຊົນນະບົດຫ່າງໄກສອກຫຼີກ, ເປັນແບບຢ່າງໃນການຮັກສາຂະນົບທໍານຽມອັນດີງາມ, ປະຕິບັດສິດສະເໝີພາບລະຫວ່າງ

ຍິງ-ຊາຍ ໃຫ້ກາຍເປັນຮູບປະທຳ. ສ້າງໂອກາດໃຫ້ແມ່ຍິງ ແລະ ເດັກນ້ອຍໄດ້ຮັບການສຶກສາລະດັບສູງ, ສ້າງໃຫ້ມີແມ່ຍິງເປັນການນຳ ແລະ ນັກທຸລະ ກິດເພີ່ມຂຶ້ນ. ດຳເນີນການສຳຫຼວດການໃຊ້ແຮງງານແມ່ຍິງແລະເດັກນ້ອຍ, ການຄ້າມະນຸດ ເພື່ອປັບປຸງນະໂຍບາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງບັນດາເຜົ່າ ໂດຍສະເພາະຢູ່ເຂດຊົນນະບົດຫ່າງໄກສອກຫຼີກ.

**- ວຽກງານພັດທະນາຊາວໜຸ່ມ-ເຍົາວະຊົນ:** ເພີ່ມທະວີການສຶກສາການເມືອງ-ແນວຄິດ, ຄຸນສົມບັດສິນທຳປະຕິວັດໃຫ້ແກ່ຊາວໜຸ່ມ-ໄວໜຸ່ມ ແລະ ເຍົາວະຊົນ, ສ້າງຂະບວນການ 2 ສາມັກຄີ, 3 ດີ ແລະ 4 ພັດທະນາ ໃຫ້ຊາວໜຸ່ມ ໂດຍສະເພາະຢູ່ໂຮງຮຽນ ແລະ ກຳລັງປະກອບອາວຸດໃຫ້ກາຍເປັນກຳລັງສືບທອດຂອງແຂວງ, ຫັນເອົາຊາວໜຸ່ມເຂົ້າໃນຂະບວນກິລາ ເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ບັນຫາຢາເສບຕິດ, ໂສເພນີ, ຂີ້ລັກງັດແງະ, ກໍ່ອາລະວາດຕີກັນ ແລະ ອື່ນໆ. ຝຶກອົບຮົມຊາວໜຸ່ມບັນດາເຜົ່າໃຫ້ມີວິຊາຊີບ ເພື່ອກາຍເປັນອາສາສະໝັກພັດທະນາຂັ້ນບ້ານປະກອບໃຫ້ກຸ່ມບ້ານຈຸດສຸມຕ່າງໆ ສ້າງເຂົາເຈົ້າເປັນພະນັກງານສືບທອດໃນອານາຄົດ. ປັບປຸງພື້ນຖານວິສາຫະກິດ ຂອງອົງການຊາວໜຸ່ມແຂວງທີ່ມີແລ້ວ ໃຫ້ເຂັ້ມແຂງ, ປະກອບສ່ວນພັນທະໃຫ້ແກ່ການພັດທະນາວຽກງານຊາວໜຸ່ມ, ສ້າງໃຫ້ມີຕົວແບບການຜະລິດ ຂອງໜ່ວຍຊາວໜຸ່ມ ຢູ່ແຕ່ລະເມືອງ, ສະຖາບັນການສຶກສາ, ກຳລັງປະກອບອາວຸດ ແລະ ບ່ອນອື່ນໆ ທີ່ມີເງື່ອນໄຂ ເພື່ອຫຼຸດຜ່ອນການແບກຫາບຂອງງົບປະມານຂອງລັດລົງ ເທື່ອລະກ້າວ.

**- ການພັດທະນາກຳມະກອນ ແລະ ຊາວຜູ້ອອກແຮງງານ:** ຕັ້ງໜ້າຊຸກຍູ້ສົ່ງເສີມບັນດາຫົວໜ່ວຍວິສາຫະກິດ ແລະ ໂຄງການລົງທຶນຕ່າງໆ ຢູພາຍໃນແຂວງ ໃຫ້ຈັດຕັ້ງຮາກຖານກຳມະບານຂຶ້ນ, ພັດທະນາຂະບວນການ 2 ສາມັກຄີ 5 ເປັນເຈົ້າ, ກ່ອນອື່ນໝົດ ແມ່ນບັນດາວິສາຫະກິດຂອງລັດ ແລະ ຂອງລວມໝູ່, ເປັນເຈົ້າການນຳໜ້າພາທາງເພື່ອແນໃສ່ສຶກສາອົບຮົມການເມືອງ-ແນວຄິດ, ພັດທະນາສີມື ແລະ ປົກປ້ອງສິດຜົນປະໂຫຍດຂອງຊາວຜູ້ອອກແຮງງານ; ສົມທົບກັບພາກສ່ວນລັດບໍລິຫານລົງກວດກາ ການປະຕິບັດກົດໝາຍແຮງງານຢູ່ບັນດາໂຮງຈັກ, ໂຮງງານຢ່າງເປັນປະຈຳພ້ອມທັງນຳເອົາຄວາມຄິດຄວາມເຫັນຂອງຜູ້ອອກແຮງງານ ແລະ ບັນຫາຂໍ້ຂັດແຍ່ງຕ່າງໆ ທີ່ເກີດຂຶ້ນກັບຜູ້ໃຊ້ແຮງງານ ເພື່ອໄກ່ເກ່ຍໃຫ້ສົມເຫດສົມຜົນແກ່ທຸກໆຝ່າຍ.

**- ວຽກງານການເຕົ້າໂຮມຄວາມສາມັກຄີ ຂອງປະຊາຊົນບັນເຜົ່າ**

ພາຍໃນແຂວງ: ຕັ້ງໜ້າສືບຕໍ່ເຮັດວຽກງານສຶກສາອົບຮົມແນວຄິດຕິດພັນກັບການບູລະນະກົງຈັກການຈັດຕັ້ງ ຂອງອົງການແນວລາວສ້າງຊາດນັບແຕ່ຂັ້ນແຂວງລົງຮອດຮາກຖານບ້ານໃຫ້ເຂັ້ມແຂງໜັກແໜ້ນ ເອົາໃຈໃສ່ປຸກລະ ດົມປະຊາຊົນບັນດາເຜົ່າທຸກຊັ້ນຄົນ, ສາດສະໜາ ແລະ ເພດໄວໃຫ້ມີຄວາມສາມັກຄີປອງດອງກັນເປັນເຈົ້າການປະກອບສ່ວນ ແລະ ມີສ່ວນຮ່ວມຕໍ່ຂະບວນການຈັດຕັ້ງປະຕິບັດໂຄງການພັດທະນາເສດຖະກິດ-ສັງຄົມ ທີ່ເຄື່ອນໄຫວຢູ່ພາຍໃນຂອບເຂດທ້ອງຖິ່ນຂອງຕົນ ທັງເປັນຜູ້ຮັບຜົນປະໂຫຍດໂດຍກົງ, ຄຸ້ມຄອງນຳໃຊ້ຈາກກິດຈະການດັ່ງກ່າວໃຫ້ເຕັມປະສິດທິພາບ ແລະ ຍືນຍົງ. ເປັນແບບຢ່າງໃນການຮັກສາຂະນົບທຳນຽມ, ຮີດຄອງປະເພນີອັນດີງາມຂອງປະຊາຊົນບັນເຜົ່າສຶກສາອົບຮົມຄົນລຸ້ນຫຼັງໃຫ້ຮັບຮູ້ເຂົ້າໃຈແລະ ຮັກສາມູນເຊື້ອປະຫວັດສາດທີ່ບັນພະບູລຸດຂອງຊາດ ແລະຂອງທ້ອງຖິ່ນ ໄດ້ສ້າງມາໃຫ້ຍືນຍົງຄົງຢູ່ໃນຈິດໃຈຂອງປວງຊົນຕະຫຼອດໄປ.

**- ການພັດທະນາດ້ານການກິລາ-ກາຍຍະກຳ:** ປັບປຸງພື້ນຖານໂຄງລ່າງກິລາກາຍຍະກຳຕ່າງໆເຊັ່ນ: ເດີ່ນກິລາບານເຕະ, ເດີ່ນກິລາໃນຮົ່ມໃຫ້ໄດ້ມາດຕະຖານ, ສູ້ຊົນໃຫ້ແຂວງອັດຕະປືສາມາດຮອງຮັບການແຂ່ງຂັນວັນຄົບຮອບກິລາລາວ ໃນປີ 2012. ຊຸກຍູ້ຂະບວນການກິລາມະຫາຊົນ ໂດຍສະເພາະແມ່ນໃນກິລາປະເພດທີ່ປະຊາຊົນນິຍົມໃຫ້ກວ້າງຂວາງ, ປະກອບນັກກິລາຈຳນວນໜຶ່ງໃຫ້ແກ່ທີມຊາດເພື່ອຮັກສາມູນເຊື້ອເຊັ່ນ: ເປຕັງ, ປີກໄກ່ ແລະ ບານສົ່ງ.

**- ການພັດທະນາດ້ານວິທະຍາສາດ ແລະ ເຕັກໂນໂລຊີ:** ໃນ 5 ປີ ຕໍ່ໜ້ານີ້ສູ້ຊົນເຮັດໃຫ້ບັນດາພະແນກການ ແລະ ເມືອງຈຳນວນໜຶ່ງສາມາດນຳໃຊ້ເຕັກນິກວິທະຍາສາດ ໃນການບໍລິຫານວຽກງານແບບອີເລັກໂທນິກ (E-Government) ເປັນຕົ້ນສືບຕໍ່ຂະຫຍາຍລະບົບ IT; ສົ່ງເສີມຫົວຄິດປະດິດສ້າງ ແລະ ການທົດລອງນຳໃຊ້ວິທະຍາສາດອັນໃໝ່. ເລັ່ງໃສ່ການນຳໃຊ້ວັດຖຸກວດສອບໃນການຕິດຊັ່ງ, ວັດແທກ ແລະ ທົດລອງ ໂດຍມີມາດຖານແນ່ນອນ.

**- ການພັດທະນາຊັບພະຍາກອນນ້ຳ ແລະ ການປົກປັກຮັກສາສິ່ງ ແວດລ້ອມ:** ປັບປຸງລະບົບເຕືອນໄພ, ຂະຫຍາຍເຄືອຂ່າຍອຸຕຸນິຍົມ-ອຸທົກກະສາດໃນຂອບເຂດທົ່ວແຂວງຢ່າງນ້ອຍໃຫ້ໄດ້ 3 ສະຖານີ, ສ້າງສູນຂໍ້ມູນຂ່າວສານ ເພື່ອການສະໜອງຂໍ້ມູນ ແລະ ແລກປ່ຽນຂໍ້ມູນຂ່າວສານອຸຕຸນິຍົມ-ອຸທົກກະສາດ ກັບບັນດາປະເທດ ໃກ້ຄຽງກໍ່ຄືຂັ້ນສູນກາງຢ່າງຕໍ່ເນື່ອງ ແລະ ປົກກະຕິ. ສ້ອມແປງເຄື່ອງວັດແທກນ້ຳເຊປຽນ, ເຊຊູ, ນ້ຳເຊກະໝານ ແລະ ກະກຽມໃນການລົງມືກໍ່ສ້າງ ແລະ ສ້ອມແປງຄືນໃໝ່ຂັ້ນໄດແທກນ້ຳ ເຊກອງ (ບ້ານເວີນແຄນ, ເມືອງສາມັກຄີໄຊ). ຕິດຕາມສະພາບດິນຟ້າອາກາດ ເພື່ອລາຍງານ ແລະ ແຈ້ງໃຫ້ການ

ນໍາຂັ້ນແຂວງ, ບັນດາເມືອງ ແລະ ຊຸມຊົນ ເພື່ອກະກຽມໃຫ້ແກ່ການຕ້ານ ແລະ ຫຼຸດຜ່ອນຜົນກະທົບຈາກໄພທໍາມະຊາດຕ່າງໆທີ່ອາດຈະເກີດຂຶ້ນ. ສືບຕໍ່ຊຸກຍູ້ບັນດາໂຄງການພັດທະນາຕ່າງໆພາຍໃນແຂວງໃຫ້ຂຽນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນ ແລະ ແຜນຄຸ້ມຄອງ ສິ່ງແລດລ້ອມຂອງໂຄງການ ແລະ ລົງສໍາຫຼວດ, ຊຸກຍູ້, ຕິດຕາມບັນດາໂຄງການຕ່າງໆ. ສົມທົບກັບ ອພບຕ ໃນການປັບປຸງສະໜາມຂີ້ເຫຍື່ອ. ເຄື່ອນໄຫວກິດຈະກໍາໂຄງການ SEM II ຕາມແຜນການທີ່ໄດ້ຮັບຮອງເອົາ. ເຄື່ອນໄຫວວຽກງານຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການເຂື່ອນໄຟຟ້າເຊກະໝານ 1 ແລະ ເຂື່ອນອື່ນໆ.

**- ການແກ້ໄຂຄວາມທຸກຍາກ, ການພັດທະນາຊົນນະບົດ, ສ້າງ ບ້ານ ແລະ ກຸ່ມບ້ານພັດທະນາ:** ຕົ້ນຕໍແມ່ນສຸມໃສ່ພັດທະນາກຸ່ມບ້ານທີ່ໄດ້ລົງມືໄປແລ້ວນັ້ນໃຫ້ສໍາເລັດ, ກາຍເປັນຕົວເມືອງເປັນຕົ້ນ: ເຂດວັງຕັດ, ກຸ່ມພະເມືອງ, ກຸ່ມບ້ານຮົມ ແລະອື່ນໆ, ສູ້ຊົນສ້າງກຸ່ມນໍ້າກົງກາຍເປັນເມືອງພູວົງໃໝ່ໃຫ້ສໍາເລັດ. ສ້າງຈຸດຫຼັກ 52 (ທາງ 18B ແລະ ທາງ 1 I) ໃຫ້ກາຍເປັນຈຸດບໍລິການຜ່ານພາຍໃນແຂວງ ຕິດພັນກັບການຈັດສັນອາຊີບຄົງທີ່.

ຮອດປີ 2015 ສູ້ຊົນສ້າງບ້ານພັດທະນາໃຫ້ໄດ້ຫຼາຍກວ່າເຄິ່ງໜຶ່ງ ຂອງຈໍານວນບ້ານທັງໝົດດ້ວຍການສົ່ງເສີມໃຫ້ບໍລິສັດພາຍໃນ ແລະ ຕ່າງ ປະເທດລົງທຶນທາງດ້ານກະສິກໍາຕາມກົນໄກ 2+3 ແລະ ກົນໄກອື່ນໆ ເພື່ອສ້າງອາຊີບ ແລະ ລາຍຮັບຄົງທີ່, ສ້າງກຸ່ມຜະລິດ ແລະ ບໍລິການກັບທີ່, ເອື້ອອໍານວຍໃຫ້ເຂົ້າເຖິງແຫຼ່ງທຶນເປັນຕົ້ນ: ທຶນທະນາຄານນະໂຍບາຍ, ທຶນໂຄງການຮ່ວມມືສາກົນ, ສ້າງໃຫ້ເຂົາເຈົ້າກຸ້ມກິນ ແລະ ຂາຍອອກສິນຄ້າຢ່າງໜ້ອຍໜຶ່ງຜະລິດຕະພັນເປັນປົກກະຕິ. ສູ້ຊົນເຮັດໃຫ້ອັດຕາຄົນທຸກຍາກຍັງເຫຼືອໜ້ອຍກວ່າ 10% ຂອງປະຊາກອນທັງໝົດທົ່ວແຂວງ. ລົບລ້າງເມືອງພູວົງ ແລະ ເມືອງຊານໄຊອອກຈາກບັນຊີ 47 ເມືອງທຸກຍາກຂອງປະເທດ ແລະ ປະກາດເມືອງໄຊເສດຖາເປັນເມືອງພັດທະນາ.

**5.3. ການພັດທະນາວຽກງານຄຸ້ມຄອງລັດ**

- ສ້າງຄວາມຍຸຕິທໍາ ແລະ ຄວາມສະເໝີພາບໃນສັງຄົມ: ສຸມໃສ່ການຜັນຂະຫຍາຍບັນດາກົດໝາຍ, ນິຕິກໍາຕ່າງໆທີ່ປະກາດໃຊ້ແລ້ວນັ້ນ ໃຫ້ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມຂອງແຂວງ ອັດຕະປື, ດ້ວຍການໂຄສະນາສຶກສາອົບຮົມກົດໝາຍຕ່າງໆ, ກວດກາຄືນບັນດາເນື້ອໃນກົດໝາຍ ແລະ ລະບຽບການທີ່ບໍ່ຖືກຕ້ອງກັບສະພາບຕົວຈິງ ເພື່ອສະເໜີສະພາແຫ່ງຊາດປັບປຸງ. ເພີ່ມທະວີການປັບປຸງ ແລະ ພັດທະນາກົງຈັກການຈັດຕັ້ງ, ບຸກຄະ ລາກອນ, ສະໜອງວັດສະດຸ-ອຸປະກອນ ແລະ ເຄື່ອງມືທີ່ຈໍາເປັນໃຫ້ແກ່ຂົງເຂດວຽກງານປົກປ້ອງກົດໝາຍເຊັ່ນ: ອົງການໄອຍະການປະຊາຊົນ, ສານປະຊາຊົນ, ອົງການສືບສວນ-ສອບສວນ, ທະນາຍຄວາມ, ອົງການກວດກາລັດ ແລະ ອົງການ ອື່ນໆ ເພື່ອເຮັດໃຫ້ອົງການດັ່ງກ່າວນີ້ມີການຈັດຕັ້ງ ແລະ ບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ ແລະ ເຂັ້ມແຂງ. ສືບຕໍ່ລົງປັບປຸງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານທີ່ມີແລ້ວໃຫ້ເຂັ້ມແຂງ ແລະສ້າງໃໝ່ໃນບ່ອນທີ່ບໍ່ທັນມີ. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງດໍາເນີນຄະດີໃຫ້ໄປຕາມຂະບວນການຍຸຕິທໍາ.

- ການຍົກສູງ ແລະສົ່ງເສີມຄວາມສາມາດ ແລະ ຄວາມເປັນເຈົ້າການຂອງການບໍລິຫານຂັ້ນເມືອງ ແລະ ບ້ານ, ການມີສ່ວນຮ່ວມຂອງປະຊາຊົນ (ຊຸມຊົນ) ເຂົ້າໃນການພັດທະນາທ້ອງຖິ່ນ-ຮາກຖານ:

ສືບຕໍ່ປັບປຸງ ແລະ ຍົກສູງປະສິດທິພາບໃນການບໍລິຫານຂອງອົງ ການປົກຄອງຂັ້ນເມືອງ ແລະ ບ້ານ ເພື່ອຮັບປະກັນໃຫ້ແກ່ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ. ສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການຂັ້ນເມືອງ ແລະ ພະນັກງານບ້ານ ເພື່ອໃຫ້ສາມາດກາຍເປັນຫົວໜ່ວຍແຜນການ-ການເງິນ ຢູ່ຂັ້ນເມືອງ ແລະ ຫົວໜ່ວຍຈັດຕັ້ງປະຕິບັດຢູ່ຂັ້ນບ້ານ ໂດຍສະເພາະວຽກງານສະຖິຕິ, ວຽກວາງແຜນພັດທະນາ ແລະ ປະເມີນຜົນແບບມີສ່ວນຮ່ວມມາແຕ່ຂັ້ນຮາກຖານ, ວຽກສ້າງອາຊີບຄົງທີ່ ແລະ ເກັບລາຍຮັບທີ່ດິນ, ວຽກ ປກຊ-ປກສ, ການເຕົ້າໂຮມຄວາມສາມັກຄີ ແລະ ອື່ນໆ. ດໍາເນີນການປະເມີນຜົນການໂຮມຫ້ອງການເຂົ້າກັນ ເພື່ອປັບປຸງແກ້ໄຂຈຸດຄົງຄ້າງ ແລະ ເສີມຂະ ຫຍາຍຈຸດດີ.

- ການກໍ່ສ້າງ ແລະ ຝຶກອົບຮົມ ຍົກລະດັບຄວາມສາມາດຂອງຜູ້ບໍລິ ຫານຂັ້ນຕ່າງໆ: ສືບຕໍ່ສ້າງພະນັກງານລຸ້ນໜຸ່ມ ເພື່ອກາຍເປັນພະນັກງານສືບທອດຂອງແຂວງ ແລະ ຂະແໜງການຕ່າງໆ ເປັນຕົ້ນ ດ້ານທິດສະດີການເມືອງ-ການປົກຄອງ, ການຄຸ້ມຄອງເສດຖະກິດ, ວິຊາວະກອນ, ເຕັກນິກວິຊາຊີບ ແລະ ພາສາຕ່າງປະເທດ, ຄອມພິວເຕີ. ເອົາໃຈໃສ່ຕັ້ງໜ້າຍົກລະດັບໃຫ້ພະນັກງານຂັ້ນຮາກຖານ, ສືບຕໍ່ບໍາລຸງຍົກລະດັບໃຫ້ນາຍບ້ານ ແລະ ຄະນະບ້ານ ເຮັດໃຫ້ເຂົາເຈົ້າເຂົ້າໃຈ ແລະ ກໍາແໜ້ນພາລະບົດບາດ, ສິດຂອບເຂດ ແລະ ຮູ້ເຄື່ອນໄຫວຕາມພາລະບົດບາດຂອງຕົນເອງດີຂຶ້ນ ເທື່ອລະກ້າວ. ປະຕິບັດການຮັບ ແລະ ບັນຈຸຊັບຊ້ອນລັດຖະກອນໃໝ່ ໂດຍອີງຕາມຄວາມຕ້ອງການຂອງຕໍາແໜ່ງຕົວຈິງ. ພ້ອມນັ້ນ ຕ້ອງແກ້ໄຂສະພາບການຂາດແຄນພະນັກງານ ໂດຍສະເພາະແມ່ນພະນັກງານຂັ້ນເມືອງ ແລະ ຂັ້ນຮາກຖານ.

**5.4. ການເປີດກວ້າງການພົວພັນຕ່າງປະເທດແລະຮ່ວມມືສາກົນ.**

ສືບຕໍ່ເພີ່ມທະວີການຮ່ວມມືກັບບັນດາແຂວງ ແລະ ນະຄອນຂອງ ສສ ຫວຽດນາມ ທີ່ໄດ້ເຊັນສັນຍາກັນນັ້ນໃຫ້ໜັກແໜ້ນ , ເປັນຮູບປະທຳຈະແຈ້ງຂຶ້ນກວ່າເກົ່າ ແລະ ຂະຫຍາຍໃໝ່ຈຳນວນໜຶ່ງ. ຕັ້ງໜ້າຮ່ວມມືກັບຣາຊະອານາຈັກກຳປູເຈຍ ໂດຍສະເພາະບັນດາແຂວງໃນເຂດ 3 ຫຼ່ຽມພັດທະນາຕົ້ນຕໍແມ່ນ ແຂວງຣັດຕະນະຄີລີ ແລະ ຊຽງແຕງ ໃຫ້ມີບາດກ້າວໃໝ່ໃນວຽກງານຊາຍແດນ, ການສົ່ງເສີມການຮ່ວມມືດ້ານທຸລະກິດ, ການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ. ເອົາໃຈໃສ່ປະຕິບັດ 12 ນະໂຍບາຍທີ່ ດຶງດູດກວ່າສຳລັບການສົ່ງເສີມການຄ້າ, ການລົງທຶນ, ການທ່ອງທ່ຽວໃນຂອບ 3 ຫລ່ຽມ CLV ໃຫ້ເປັນຮູບປະທຳ, ເປັນຕົ້ນສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ການຈັດກອງປະຊຸມຮອບວຽນພ້ອມງານວາງສະແດງສິນຄ້າ, ສິລະປະ, ກິລາ, ຊາວໜຸ່ມ ແລະ ອື່ນໆໃນທ້າຍປີ 2011. ຄົ້ນຄວ້າກຳນົດບັນດາໂຄງການບູລິມະສິດ ເພື່ອຮ່ວມມືໃນຕໍ່ໜ້າ ແລະ ລະດົມການຊ່ວຍເຫຼືອຈາກຍີ່ປຸ່ນ. ເປີດກວ້າງການຮ່ວມມືກັບບັນດາແຂວງພາກຕາເວັນອອກສ່ຽງເຫນືອຂອງໄທ, ຈີນ ແລະ ມົງໂກລີ. ຮ່ວມມືກັບບັນດາອົງການຈັດຕັ້ງ ແລະ ສະຖາບັນການເງິນສາກົນ ໃນການເຂົ້າມາຊ່ວຍເຫຼືອດ້ານທຶນຮອນເພື່ອພັດທະນາຕາມໂຄງການບູລິມະສິດທີ່ໄດ້ກຳນົດໄວ້. ອຳນວຍຄວາມສະດວກໃຫ້ແກ່ພາກທຸລະກິດຕ່າງປະເທດ ໄດ້ເຂົ້າມາລົງທຶນຢ່າງເປັນຮູບປະທຳຫຼາຍຂຶ້ນໂດຍການປັບປຸງຂອດບໍລິການ, ສະໜອງຂໍ້ມູນທີ່ຈຳເປັນ ແລະ ມີຄວາມສັກສິດຕໍ່ການປະຕິບັດກົດໝາຍ.

**5.5. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.**

ໃນ 5 ປີຕໍ່ໜ້າ ຕ້ອງໄດ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ ແລະ ມີລະບຽບແບບແຜນທັນສະໄໝ. ຮັບປະກັນການພັດທະນາຄ້າຍຄູຕາມທິດສ້າງກົມກອງວັດທະນະທຳ ຕິດພັນກັບ 3 ໂຄງ ການໃຫຍ່ 9 ຂະບວນການຂອງກະຊວງ ປກຊ. ຄຽງຄູ່ກັນນັ້ນ ກໍເອົາໃຈໃສ່ ເຮັດໃຫ້ສັງຄົມມີຄວາມສະຫງົບປອດໄພ, ປັບປຸງຄ້າຍດັດສ້າງຕິດພັນກັບການບຳລຸງວິຊາຊີບ ຕໍ່ຜູ້ທີ່ຖືກດັດສ້າງໃຫ້ກາຍເປັນພົນລະເມືອງດີ. ຮັບປະກັນຄວາມປອດໄພ ຕໍ່ຜູ້ເຂົ້າມາລົງທຶນ, ຜູ້ມາ ທ່ອງທ່ຽວ; ຮັບປະກັນບໍ່ໃຫ້ມີສະພາບແອບແຝງຂອງກຸ່ມຄົນບໍ່ຫວັງດີ ເຂົ້າມາໃນຮູບແບບຕ່າງໆ. ຕັ້ງໜ້າແກ້ໄຂປະກົດການຫຍໍ້ທໍ້ຕ່າງໆເປັນຕົ້ນ: ບັນຫາຢາເສບຕິດ, ການຂີ້ລັກງັດແງະ, ການກໍ່ອາລະວາດຕີກັນ, ການຄ້າມະນຸດ ແລະ ອື່ນໆ.

**ພາກທີ III:**

**ກົນໄກ ແລະ ບາງມາດຕະການຈັດຕັ້ງປະຕິບັດ**

ເພື່ອບັນລຸໄດ້ບັນດາທິດທາງ ແລະ ຄາດໝາຍໃນການພັດທະນາ ເສດຖະກິດ-ສັງຄົມໃນໄລຍະ 5 ປີ ແຕ່ປີ 2011-2015 ຂອງແຂວງ, ພວກ ເຮົາຈະຕ້ອງໄດ້ປະຕິບັດກົນໄກ ແລະ ບາງມາດຕະການສຳຄັນ ດັ່ງລຸ່ມນີ້:

1: ໃນ 5 ປີ ຕໍ່ໜ້ານີ້ ລັດຈະໄດ້ສຸມໃສ່ການລົງທຶນເຂົ້າໃສ່ການພັດທະນາໂຄງລ່າງພື້ນຖານຄື: ເສັ້ນທາງ; ໄຟຟ້າ; ຊົນລະປະທານ, ສູນບໍລິການເຕັກນິກກະສິກຳ ແນໃສ່ສ້າງລາຍຮັບໂດຍກົງໃຫ້ແກ່ປະຊາຊົນ, ຍູ້ແຮງການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ; ສົມທົບກັບການປ່ອຍສິນເຊື່ອຂອງທະນາຄານ ເພື່ອສົ່ງເສີມການຜະລິດເປັນສິນຄ້າ.

- ສ່ວນການພັດທະນາດ້ານວັດທະນະທຳ-ສັງຄົມ ແມ່ນສູ້ຊົນປັບປຸງຕົນເອງທຸກດ້ານ ເພື່ອຍາດແຍ່ງການຊ່ວຍເຫຼືອຈາກສາກົນເປັນຕົ້ນຕໍ ຕາມທິດເພື່ອບັນລຸເປົ້າໝາຍສະຫະສະວັດການພັດທະນາ (MDG) ທີ່ຜູ້ໃຫ້ທຶນໄດ້ໃຫ້ຄຳໝັ້ນສັນຍາ.

- ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ສັງຄົມ, ຜູ້ປະກອບການ ແລະ ນັກທຸລະກິດ ເພື່ອເຂົ້າເຖິງຂໍ້ມູນຂ່າວສານຕ່າງໆຄື: ກົດໝາຍ-ລະບຽບການຕ່າງໆ, ນະໂຍບາຍຂອງລັດ: ສະພາບການເສດຖະກິດພາຍໃນ ແລະ ຕ່າງປະເທດ; ສະຖິຕິຂ່າວສານທີ່ຈຳເປັນຢູ່ບັນດາພະແນກການ ແລະ ເມືອງ, ປັບປຸງການໂຄສະນາ ແລະ ໃຫ້ຄຳປຶກສາດ້ານການລົງທຶນ, ດ້ານກົດໝາຍ ແລະ ການແບ່ງຂັ້ນຄຸ້ມຄອງຕ່າງໆ.

**2: ກົນໄກ ແລະ ວິທີການ:**

- ຈັດລຽງບູລິມະສິດຄວາມສຳຄັນ ຂອງໂຄງການຕາມນະໂຍບາຍ, ຂະແໜງການ ແລະ 4 ແຫຼ່ງທຶນໃຫ້ເຫມາະສົມ, ໂດຍ ແຍກໂຄງການອອກເປັນ 2 ປະເພດຄື: ໂຄງການຂະໜາດໃຫຍ່ ແລະ ໂຄງການທົ່ວໄປ, ເນື່ອງຈາກວ່າໂຄງການທີ່ຂະແໜງການ ແລະ ເມືອງສະເໜີມາມີທັງໝົດ 1.122 ໂຄງການ ລວມມູນຄ່າປະມານ 15.200 ຕື້ກີບ. ໃນນີ້ ທຶນພາຍໃນ 4.408 ຕື້ກີບ, ຂໍການຊ່ວຍເຫຼືອຈາກສາກົນ 2.938 ຕື້ກີບ, ສົ່ງເສີມການລົງທຶນຈາກເອກະຊົນພາຍໃນ-ຕ່າງປເທດ 7.500 ຕື້ກີບ ແລະ ສິນເຊື່ອທະນາຄານ 4.000 ຕື້ກີບ. ເຊິ່ງເກີນຄວາມສາມາດ ຕໍ່ຂະໜາດເສດຖະກິດຂອງແຂວງ ແລະ ລາຍຮັບງົບປະມານທ້ອງຖິ່ນ.

- ຈະຈັດສັນບູລິມະສິດ ໃຫ້ຂະແໜງການ ແລະ ເມືອງ ຕາມແຫຼ່ງ ທຶນທີ່ມີ, ສະເພາະໂຄງການຂະໜາດໃຫຍ່ ຫລື MEGA Projects (ມູນຄ່າ 10 ຕື້ກີບຂຶ້ນໄປ) ທັງໝົດ 77 ໂຄງການ, ລວມມູນຄ່າ 13.000 ຕື້ກີບ, ໃນນີ້ ທຶນພາຍໃນ ມູນຄ່າ 3.700 ຕື້ກີບ, ສະເໜີຂໍທຶນຈາກສາກົນ (ODA) ມູນຄ່າ 2.448 ຕື້ກີບ, ສະເໜີການລົງທຶນໂດຍກົງຈາກຕ່າງປະເທດ (FDI) ມູນຄ່າ 6.939 ຕື້ກີບ. ບັນດາໂຄງການຕ່າງໆ ຕ້ອງໄດ້ສຳຫຼວດອອກແບບ ແລະ ຂຽນບົດວິພາກເສດຖະກິດ-ເຕັກນິກ ບົນພື້ນຖານປະສິດທິຜົນ.

- ໂຄງການປະເພດສົ່ງເສີມ ແລະ ປະເພດທຸລະກິດ ແມ່ນຈະຫັນໄປສູ່ການລົງທຶນພາກເອກະຊົນ ແລະ ສິນເຊື່ອທະນາຄານ. ສ່ວນໂຄງການຂະແໜງສັງຄົມ, ລຶບລ້າງຄວາມທຸກຍາກ ຈະເນັ້ນໃສ່ການຊ່ວຍເຫຼືອຈາກສາກົນ ເປັນຕົ້ນຕໍ.

3. ຈັດກອງປະຊຸມສຳມະນາກ່ຽວກັບການຄຸ້ມຄອງມະຫາພາກ ກໍ່ຄືການຄຸ້ມຄອງລັດ ແນໃສ່ເພີ່ມທະວີຄວາມເຂົ້າໃຈ, ຄວາມຮັບຜິດຊອບຕໍ່ການນຳພາຂອງບັນດາພະແນກການ, ບັນດາເມືອງ ຢ່າງເປັນເອກະພາບໃນການຄຸ້ມຄອງເສດຖະກິດ-ສັງຄົມ.

4. ເຜີຍແຜ່ແນະນຳແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ຂອງແຂວງ ກ່ຽວກັບຈັດຕັ້ງປະຕິບັດງົບປະມານແຫ່ງລັດ. ໂດຍສຸມໃສ່ຂຸດຄົ້ນທຸກແຫຼ່ງລາຍຮັບ ແລະ ເກັບລາຍຮັບງົບປະມານ ເພື່ອຮັບປະກັນໃຫ້ລາຍຈ່າຍງົບປະມານໄປຕາມແຜນທີ່ວາງໄວ້, ປະສານສົມທົບຢ່າງແໜ້ນແຟ້ນ ລະຫວ່າງແຂວງ, ເມືອງ, ບ້ານ ແລະ ພາກສ່ວນເສດຖະກິດຕ່າງໆ ໃຫ້ມີຄວາມກົມກຽວ ແລະ ໄປຕາມທິດດຽວກັນ.

- ບັນດາຂະແໜງການ, ອົງການທີ່ກ່ຽວຂ້ອງ ແລະ ບັນດເມືອງນຳໃຊ້ວິທີການ ແລະ ກົນໄກ ທີ່ມີຄວາມເໝາະສົມສາມາດກະຕຸກຊຸກຍູ້ພື້ນ ຖານໂຄງການ, ແຜນງານກໍ່ຄືການສົ່ງເສີມການຜະລິດ, ຫົວໜ່ວຍການຜະລິດ, ທຸລະກິດ, ການບໍລິການ; ປະຕິບັດຫຼັກການວິຊາການ, ນຳໃຊ້ເຕັກໂນໂລຢີໃໝ່ ແລະ ກົນຈັກທີ່ທັນສະໄໝ ເພື່ອແນໃສ່ຍົກສູງປະສິດທິພາບ, ສະມັດຕະພາບຂອງຂະແໜງການ ແລະ ກິດຈະການ.

5. ບັນດາພະນແນກການ, ອົງການທຽບເທົ່າ ແລະບັນດາເມືອງ ໃຫ້ສຸມໃສ່ຈັດຕັ້ງປະຕິບັດບັນດາ ໂຄງການທີ່ແຂວງ ແລະ ລັດຖະບານໄດ້ອະນຸມັດ, ພ້ອມທັງຄຸ້ມຄອງນຳໃຊ້ໃຫ້ເກີດໝາກເກີດຜົນ, ໃນນີ້ ຕົ້ນຕໍແມ່ນບັນດາໂຄງການທີ່ຈະສ້າງມູນຄ່າເພີ່ມໃຫ້ເສດຖະກິດຂອງແຂວງ, ການແກ້ໄຂຄວາມທຸກຍາກ ແລະ ການເຊື່ອມໂຍງກັບແຂວງອື່ນໆ ເຊັ່ນ: ບັນດາພື້ນຖານໂຄງລ່າງທາງດ້ານກະສິກຳ, ໂຄງລ່າງດ້ານຄົມມະນາຄົມ-ຂົນສົ່ງ, ໂຄງລ່າງການສຶກສາ ແລະ ໂຄງລ່າງດ້ານສາທາລະນະສຸກ, ການຈັດສັນອາຊີບຄົງທີ່ ແລະ ແກ້ໄຂຄວາມທຸກຍາກ, ພັດທະນາບ້ານ ແລະ ກຸ່ມບ້ານພັດທະນາ.

- ພະແນກແຜນການ-ການລົງທຶນ, ຫ້ອງວ່າການປົກຄອງແຂວງ ເປັນໃຈກາງໃນການຕິດຕາມ ແລະ ຊຸກຍູ້ການເຄື່ອນໄຫວ ຂອງພະແນກ ການຕ່າງໆ ແລະ ເມືອງ ໃຫ້ຜັນຂະຫຍາຍວຽກລະອຽດແຕ່ລະດ້ານ ແລະ ຈັດລຽງບູລິມະສິດຄືນໃນແຕ່ລະປີ ເພື່ອຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບສະພາບ ແລະ ເງື່ອນໄຂແຕ່ລະໄລຍະ.

**(ຂໍຂອບໃຈ)**